ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 205 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 02 ສິງຫາ 2018

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ການຄຸ້ມຄອງໜີ້ສິນສາທາລະນະ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ, ສະບັບເລກທີ 87/ສພຊ, ລົງວັນທີ 18 ມິຖຸນາ 2018 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ການຄຸ້ມຄອງໜີ້ສິນສາທາລະນະ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ, ສະບັບເລກທີ 07/ຄປຈ, ລົງວັນທີ 16 ກໍລະກົດ 2018.

ປະທານປະເທດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍ ການຄຸ້ມຄອງໜີ້ສິນສາທາລະນະ.

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 87 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 18/06/18

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການຄຸ້ມຄອງໜີ້ສິນສາທາລະນະ

---

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການຄຸ້ມຄອງໜີ້ສິນສາທາລະນະ ໃນວາລະກອງປະຊຸມ ຄັ້ງວັນທີ 18 ມິຖຸນາ 2018.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການການຄຸ້ມຄອງໜີ້ສິ້ນສາທາລະນະ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 46 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 18 ມິຖຸນາ 2018

# ກົດໝາຍ

# ວ່າດ້ວຍການຄຸ້ມຄອງໜີ້ສິນສາທາລະນະ

## ພາກທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງວຽກງານໜີ້ສິນສາທາລະນະ ເພື່ອໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ມີຄວາມເປັນເອກະພາບ, ລວມສູນ, ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ສະໜອງທຶນ, ພັດທະນາຕະຫຼາດທຶນພາຍໃນ, ຮັບປະກັນຄວາມໝັ້ນທ່ຽງຂອງເສດຖະກິດ, ຫຼຸດຄ່າໃຊ້ຈ່າຍ ແລະ ຄວາມສ່ຽງຂອງໜີ້ສິນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ການຄຸ້ມຄອງໜີ້ສິນສາທາລະນະ**

ໜີ້ສິນສາທາລະນະ ແມ່ນ ລວມຍອດໜີ້ສິນທີ່ເກີດຈາກການກູ້ຢືມ ແລະ ພັນທະທີ່ເກີດຈາກການຄ້ຳປະກັນຂອງລັດຖະບານ ນຳໃຊ້ເຂົ້າໃນການພັດທະນາ ທີ່ເປັນປະໂຫຍດຕໍ່ສາທາລະນະ ຊຶ່ງບໍ່ກວມເອົາໜີ້ສິນຂອງທະນາຄານ ແຫ່ງ ສປປ ລາວ ແລະ ທະນາຄານທຸລະກິດຂອງລັດ.

ການຄຸ້ມຄອງໜີ້ສິນສາທາລະນະ ແມ່ນ ການຈັດຕັ້ງປະຕິບັດບັນດາ ຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບວຽກງານໜີ້ສິນສາທາລະນະ ແລະ ການນຳໃຊ້ແຫຼ່ງທຶນ ໃຫ້ຖືກຕ້ອງຕາມກົດໝາຍ ເພື່ອຮັບປະກັນໃຫ້ຖານະໜີ້ສິນສາທາລະນະ ຢູ່ໃນລະດັບທີ່ສາມາດຄວບຄຸມ ແລະ ຊຳລະໜີ້ຄືນໄດ້.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ໜີ້ສິນ** ໝາຍເຖິງ ພັນທະທີ່ຕ້ອງຊຳລະຄືນ ຕາມກຳນົດເວລາ ຊຶ່ງມີ ຕົ້ນທຶນ, ດອກເບ້ຍ, ຄ່າບໍລິການ ແລະ ຄ່າໃຊ້ຈ່າຍ ທີ່ເກີດຈາກການນຳໃຊ້ເຄື່ອງມືໜີ້ສິນ ທັງພາຍໃນ ແລະ ຕ່າງປະເທດ;
2. **ເຄື່ອງມືໜີ້ສິນ** ໝາຍເຖິງ ການກູ້ຢືມ, ພັນທະບັດ, ການຄ້ຳປະກັນການກູ້ຢືມ, ການຄ້ຳປະກັນການຊຳລະ, ສັນຍາໃຊ້ໜີ້ ຫຼື ເຄື່ອງມືໜີ້ສິນອື່ນ ທີ່ກໍ່ໃຫ້ເກີດພັນທະໃນການຊຳລະຄືນ;

3. **ໜີ້ສິນໄລຍະສັ້ນ** ໝາຍເຖິງ ໜີ້ສິນທີ່ມີໄລຍະການຊໍາລະ ພາຍໃນກໍານົດເວລາບໍ່ເກີນ ໜຶ່ງ ປີ;

4. **ໜີ້ສິນໄລຍະກາງ** ໝາຍເຖິງ ໜີ້ສິນທີ່ມີໄລຍະເວລາການຊໍາລະ ເກີນ ໜຶ່ງ ປີ ເຖິງ ຫ້າ ປີ;

5. **ໜີ້ສິນໄລຍະຍາວ** ໝາຍເຖິງ ໜີ້ສິນທີ່ມີໄລຍະເວລາການຊໍາລະ ເກີນ ຫ້າ ປີຂຶ້ນໄປ;

6. **ການກູ້ຢືມໃນເງື່ອນໄຂຜ່ອນຜັນ** ໝາຍເຖິງ ການກູ້ຢືມ ຫຼື ການສະໜອງທຶນ ທີ່ມີເງື່ອນໄຂການກູ້ຢືມຕໍ່າກວ່າການກູ້ຢືມໃນເງື່ອນໄຂທຸລະກິດ ເປັນຕົ້ນ ດອກເບ້ຍຕໍ່າ, ໄລຍະຊໍາລະຍາວ ແລະ ໄລຍະປອດໜີ້ຍາວ;

7. **ການກູ້ຢືມໃນເງື່ອນໄຂທຸລະກິດ** ໝາຍເຖິງ ການກູ້ຢືມທີ່ມີອັດຕາດອກເບ້ຍ ແລະ ເງື່ອນໄຂອື່ນຕາມກົນໄກຕະຫຼາດ;

8. **ການກູ້ຢືມທາງການເພື່ອການພັດທະນາ** ໝາຍເຖິງ ການກູ້ຢືມຂອງລັດຖະບານກັບ ຄູ່ຮ່ວມພັດທະນາ ໂດຍມີເງື່ອນໄຂຜ່ອນຜັນສູງ;

9. **ຜູ້ໃຫ້ກູ້ຢືມ** ໝາຍເຖິງ ສະຖາບັນການເງິນ ທັງພາຍໃນ, ສາກົນ ແລະ ບັນດາປະເທດຄູ່ຮ່ວມມືສອງຝ່າຍ;

10. **ການບໍລິຫານສະພາບຄ່ອງໜີ້ສິນ** ໝາຍເຖິງ ການດໍາເນີນມາດຕະການ ເພື່ອເຮັດໃຫ້ເງື່ອນໄຂຂອງເງິນກູ້ຢືມທີ່ມີໃນປັດຈຸບັນສອດຄ່ອງກັບຄວາມສາມາດຊໍາລະ ເຊັ່ນ ການຍືດເວລາການຊໍາລະ ໂດຍການກູ້ຢືມໃໝ່ມາຊໍາລະໜີ້ເກົ່າ, ການຊື້-ຂາຍໜີ້ສິນ, ການກໍານົດໄລຍະເວລາການຊໍາລະຄືນໃໝ່, ການປ່ຽນແປງສະກຸນເງິນ ແລະ ອັດຕາດອກເບ້ຍ;

11. **ຖານະໜີ້ສິນສາທາລະນະ** ໝາຍເຖິງ ການປະເມີນຍອດໜີ້ສິນສາທາລະນະ, ການຊໍາລະ ແລະ ປັດໃຈອື່ນ ທຽບໃສ່ມາດຕະຖານຄວາມໝັ້ນຄົງໜີ້ສິນ ແລະ ພື້ນຖານເສດຖະກິດ ແຕ່ລະໄລຍະ;

12. **ຍອດເຫຼືອໜີ້ສິນສາທາລະນະ** ໝາຍເຖິງ ມູນຄ່າໜີ້ສິນສາທາລະນະ ທີ່ຍັງບໍ່ທັນໄດ້ຊໍາລະ;

13. **ອັດຕາສ່ວນໜີ້ສິນສາທາລະນະ** ໝາຍເຖິງ ຍອດເຫຼືອໜີ້ສິນສາທາລະນະໃນແຕ່ລະໄລຍະ ທີ່ຄິດໄລ່ເປັນສ່ວນຮ້ອຍ ທຽບໃສ່ ລວມຍອດຜະລິດຕະພັນພາຍໃນ ແລະ ການສົ່ງອອກ, ງົບປະມານຊໍາລະໜີ້ສິນແຕ່ລະປີຄິດໄລ່ເປັນສ່ວນຮ້ອຍ ທຽບໃສ່ ລາຍຮັບງົບປະມານພາຍໃນ ແລະ ອັດຕາສ່ວນໜີ້ສິນສາທາລະນະອື່ນ;

14. **ໜີ້ສິນສໍາຮອງຂອງລັດຖະບານ** ໝາຍເຖິງ ພັນທະທີ່ເກີດຈາກການຄໍ້າປະກັນຂອງລັດຖະບານ ຊຶ່ງຈະກາຍເປັນໜີ້ສິນ ເມື່ອຜູ້ໄດ້ຮັບການຄໍ້າປະກັນນັ້ນ ບໍ່ສາມາດຊໍາລະຕາມສັນຍາ;

15. **ພະນັກງານຄຸ້ມຄອງໜີ້ສິນສາທາລະນະ** ໝາຍເຖິງ ພະນັກງານທີ່ກະຊວງການເງິນ ແຕ່ງຕັ້ງໃຫ້ປະຕິບັດໜ້າທີ່ໃນການຄຸ້ມຄອງວຽກງານໜີ້ສິນສາທາລະນະ;

16. **ສາທາລະນະ** ໝາຍເຖິງ ການເປັນຂອງສ່ວນລວມ ເຊັ່ນ ຖ້າເປັນໜີ້ສິນ ກໍເປັນຂອງປະຊາຊົນທັງໝົດ ໂດຍລັດເປັນຜູ້ຄຸ້ມຄອງ ແລະ ບໍລິຫານ;

17. **ມາດຕະຖານຄວາມປອດໄພດ້ານໜີ້ສິນ** ໝາຍເຖິງ ການກໍານົດອັດຕາສ່ວນໜີ້ສິນ ຕໍ່ຕົວຊີ້ວັດຕ່າງໆທີ່ສາກົນກໍານົດ;

18. **ທີ່ປຶກສາສະເພາະດ້ານທີ່ຖືກຍອມຮັບຈາກສາກົນ** ໝາຍເຖິງ ນິຕິບຸກຄົນ ທີ່ໄດ້ສ້າງຕັ້ງ ແລະ ເຄື່ອນໄຫວຖືກຕ້ອງຕາມກົດໝາຍ, ມີຄຸນວຸດທິ, ມີປະສົບການ ແລະ ມີຜົນງານທີ່ມີຊື່ສຽງ ໃນວຽກງານໃດໜຶ່ງ ແລະ ໄດ້ຮັບການຢັ້ງຢືນຈາກສາກົນ;

19. **ໜັງສືຊວນຊື້** ໝາຍເຖິງ ຂໍ້ມູນກ່ຽວກັບພັນທະບັດ ທີ່ສະເໜີອອກຈໍາໜ່າຍ ເປັນຕົ້ນ ວິທີການສະເໜີຂາຍ, ຈໍານວນ, ມູນຄ່າກໍານົດ, ລາຄາຂາຍ, ໄລຍະເວລາຂາຍ, ວິທີການຈອງຊື້, ຜົນຕອບແທນ ຫຼື ອັດຕາດອກເບ້ຍ ການສົ່ງມອບ ແລະ ເງື່ອນໄຂ ໃນການໂອນພັນທະບັດທີ່ກໍານົດ ໂດຍຜູ້ອອກພັນທະບັດ.

**ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານຄຸ້ມຄອງໜີ້ສິນສາທາລະນະ**

ລັດ ມີນະໂຍບາຍຄຸ້ມຄອງໜີ້ສິນສາທາລະນະ ດ້ວຍການວາງລະບຽບການຄຸ້ມຄອງໜີ້ສິນສາທາລະນະ ແລະ ການນໍາໃຊ້ທຶນ ທີ່ໄດ້ຈາກເຄື່ອງມືໜີ້ສິນ ໃຫ້ມີປະສິດທິຜົນສູງ, ຈໍາກັດໜີ້ສິນສາທາລະນະ ໃຫ້ຢູ່ໃນລະດັບທີ່ສາມາດຄວບຄຸມ ແລະ ຊໍາລະໜີ້ຄືນໄດ້, ຮັບປະກັນການສະໜອງທຶນໃຫ້ແກ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ.

**ມາດຕາ 5 ຫຼັກການພື້ນຖານ ກ່ຽວກັບວຽກງານຄຸ້ມຄອງໜີ້ສິນສາທາລະນະ**

ວຽກງານຄຸ້ມຄອງໜີ້ສິນສາທາລະນະ ໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;
2. ສອດຄ່ອງກັບ ກົດໝາຍ, ແຜນຍຸດທະສາດການຄຸ້ມຄອງໜີ້ສິນສາທາລະນະ, ແຜນງົບປະມານແຫ່ງລັດ ແຕ່ລະໄລຍະ;
3. ຮັບປະກັນໃຫ້ເສດຖະກິດມະຫາພາກມີສະຖຽນລະພາບ ແລະ ງົບປະມານແຫ່ງລັດ ມີຄວາມໝັ້ນຄົງ;
4. ນໍາໃຊ້ ແລະ ຈັດສັນ ແຫຼ່ງທຶນທີ່ໄດ້ຈາກການກູ້ຢືມ ໃຫ້ຖືກຕ້ອງຕາມເປົ້າໝາຍ, ມີປະສິດທິພາບ ແລະ ປະສິດທິຜົນ;
5. ມີຄວາມໂປ່ງໃສ, ຍຸຕິທໍາ ແລະ ສາມາດກວດສອບໄດ້;
6. ຮັບປະກັນການປະຕິບັດພັນທະໜີ້ສິນຕໍ່ຜູ້ໃຫ້ກູ້ຢືມ ຢ່າງສະເໝີພາບ;
7. ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 6 ຂອບເຂດການນໍາໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນໍາໃຊ້ສໍາລັບ ການຈັດຕັ້ງຂອງລັດ, ລັດວິສາຫະກິດ ແລະ ພາກສ່ວນອື່ນ ທີ່ພົວພັນກັບວຽກງານຄຸ້ມຄອງໜີ້ສິນສາທາລະນະ ໃນຂອບເຂດທົ່ວປະເທດ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບ ຕ່າງປະເທດ, ສະຖາບັນການເງິນ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບວຽກງານລະດົມທຶນ ແລະ ຄຸ້ມຄອງໜີ້ສິນສາທາລະນະ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກໂນໂລຊີ, ການຝຶກອົບຮົມ, ການສໍາມະນາ, ການຍົກລະດັບຄວາມຮູ້ ຄວາມສາມາດດ້ານວິຊາການ ເພື່ອເຮັດໃຫ້ວຽກງານຄຸ້ມຄອງໜີ້ສິນສາທາລະນະ ມີຄຸນນະພາບ, ເຂັ້ມແຂງ, ທັນສະໄໝ ແລະ ຮັບປະກັນຖານະການເງິນຂອງປະເທດມີຄວາມໝັ້ນທ່ຽງ, ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ແຜນຍຸດທະສາດການຄຸ້ມຄອງໜີ້ສິນສາທາລະນະ

**ມາດຕາ 8 ແຜນຍຸດທະສາດການຄຸ້ມຄອງໜີ້ສິນສາທາລະນະ**

ແຜນຍຸດທະສາດການຄຸ້ມຄອງໜີ້ສິນສາທາລະນະ ແມ່ນ ການກຳນົດນະໂຍບາຍ, ທິດທາງລວມ, ອັດຕາສ່ວນໜີ້ສິນ, ແຜນກູ້ຢືມ ແລະ ແຜນຊຳລະ ໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດ ໃນແຕ່ລະໄລຍະ.

ກະຊວງການເງິນ ຄົ້ນຄວ້າ ສ້າງແຜນຍຸດທະສາດການຄຸ້ມຄອງໜີ້ສິນສາທາລະນະ ຫ້າ ປີ ແລ້ວລາຍງານລັດຖະບານ ເພື່ອນຳສະເໜີຕໍ່ສະພາແຫ່ງຊາດ ພິຈາລະນາຮັບຮອງ.

**ມາດຕາ 9 ເນື້ອໃນແຜນຍຸດທະສາດການຄຸ້ມຄອງໜີ້ສິນສາທາລະນະ**

ແຜນຍຸດທະສາດການຄຸ້ມຄອງໜີ້ສິນສາທາລະນະ ມີເນື້ອໃນ ດັ່ງນີ້:

1. ປະເມີນຖານະໜີ້ສິນສາທາລະນະຮອບດ້ານ;
2. ກຳນົດອັດຕາສ່ວນໜີ້ສິນສາທາລະນະ ໄລຍະກາງ ແລະ ໄລຍະຍາວ ບໍ່ໃຫ້ເກີນມາດຕະຖານຄວາມປອດໄພດ້ານໜີ້ສິນ ແລະ ສອດຄ່ອງກັບລະດັບການຂະຫຍາຍຕົວຂອງເສດຖະກິດ ໃນແຕ່ລະໄລຍະ;
3. ກຳນົດແຜນກູ້ຢືມໄລຍະກາງ ແລະ ແຜນການບໍລິຫານສະພາບຄ່ອງໜີ້ສິນ;
4. ການຈັດສັນງົບປະມານ ແລະ ວິທີການຊຳລະໜີ້ສິນ;
5. ມາດຕະການຈັດຕັ້ງປະຕິບັດ.

## ພາກທີ III
## ໂຄງປະກອບໜີ້ສິນສາທາລະນະ

**ມາດຕາ 10 ໂຄງປະກອບໜີ້ສິນສາທາລະນະ**

ໜີ້ສິນສາທາລະນະ ປະກອບດ້ວຍ:

1. ການກູ້ຢືມຂອງລັດຖະບານ;
2. ການຄ້ຳປະກັນຂອງລັດຖະບານ.

### ໝວດທີ 1
### ການກູ້ຢືມຂອງລັດຖະບານ

**ມາດຕາ 11 ການກູ້ຢືມຂອງລັດຖະບານ**

ການກູ້ຢືມຂອງລັດຖະບານ ແມ່ນ ເຄື່ອງມືໜີ້ສິນ ທີ່ລັດຖະບານນຳໃຊ້ເພື່ອລະດົມທຶນຈາກ ພາຍໃນ ແລະ ຕ່າງປະເທດ ທີ່ກໍ່ໃຫ້ເກີດພັນທະໃນການຊຳລະຄືນ ໂດຍມີສັນຍາກູ້ຢືມເປັນຫຼັກຖານ.

### ມາດຕາ 12 ເປົ້າໝາຍການກູ້ຢືມຂອງລັດຖະບານ

ເປົ້າໝາຍການກູ້ຢືມຂອງລັດຖະບານ ມີ ດັ່ງນີ້:

1. ການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການ ຂອງກະຊວງ, ອົງການ ແລະ ອົງການປົກຄອງຂັ້ນແຂວງ ທີ່ຢູ່ໃນແຜນພັດທະນາເສດຖະກິດ-ສັງຄົມ ແລະ ມີແຫຼ່ງງົບປະມານມາຊຳລະ;

2. ການດຸນດ່ຽງງົບປະມານແຫ່ງລັດ;

3. ການບໍລິຫານສະພາບຄ່ອງໜີ້ສິນໃນແຕ່ລະໄລຍະ;

4. ເປົ້າໝາຍອື່ນ.

### ມາດຕາ 13 ຮູບການການກູ້ຢືມຂອງລັດຖະບານ

ການກູ້ຢືມຂອງລັດຖະບານ ມີ ສອງ ຮູບການຕົ້ນຕໍ ດັ່ງນີ້:

1. ການກູ້ຢືມໂດຍກົງ;

2. ການອອກພັນທະບັດລັດຖະບານ.

## ກ. ການກູ້ຢືມໂດຍກົງ

### ມາດຕາ 14 ການກູ້ຢືມໂດຍກົງ

ການກູ້ຢືມໂດຍກົງ ແມ່ນ ການກູ້ຢືມລະຫວ່າງລັດຖະບານກັບຜູ້ໃຫ້ກູ້ຢືມ ດ້ວຍການເຮັດສັນຍາໃນເງື່ອນໄຂຜ່ອນຜັນ ຫຼື ໃນເງື່ອນໄຂທຸລະກິດ.

ກະຊວງການເງິນ ເປັນຜູ້ຕາງໜ້າລັດຖະບານ ໃນການດຳເນີນຂັ້ນຕອນການກູ້ຢືມໂດຍກົງ.

### ມາດຕາ 15 ເງື່ອນໄຂການກູ້ຢືມໂດຍກົງ

ເງື່ອນໄຂການກູ້ຢືມໂດຍກົງ ມີ ດັ່ງນີ້:

1. ແຜນງານ ຫຼື ໂຄງການ ຢູ່ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ທີ່ສະພາແຫ່ງຊາດໄດ້ຮັບຮອງ;

2. ແຜນງານ ຫຼື ໂຄງການ ມີບົດວິພາກເສດຖະກິດ-ເຕັກນິກ ທີ່ຖືກຮັບຮອງຈາກຂະແໜງການທີ່ກ່ຽວຂ້ອງ ແລະ ໄດ້ຮັບການຢັ້ງຢືນຈາກທີ່ປຶກສາສະເພາະດ້ານ ທີ່ໄດ້ຮັບການຍອມຮັບຈາກສາກົນ, ສຳລັບແຜນງານ ຫຼື ໂຄງການ ທີ່ມີມູນຄ່າເກີນ ສີ່ຮ້ອຍຕື້ ກີບ ຂຶ້ນໄປ ຕ້ອງໄດ້ຖືກຮັບຮອງໂດຍສະພາແຫ່ງຊາດ;

3. ການກູ້ຢືມ ຢູ່ໃນແຜນກູ້ຢືມໄລຍະກາງຂອງລັດຖະບານ;

4. ການກູ້ຢືມ ເພື່ອດຸນດ່ຽງງົບປະມານແຫ່ງລັດ ຕາມແຜນທີ່ສະພາແຫ່ງຊາດຮັບຮອງ;

5. ການກູ້ຢືມ ເພື່ອບໍລິຫານສະພາບຄ່ອງໜີ້ສິນ ແລະ ເປົ້າໝາຍອື່ນ ຕາມການຕົກລົງຂອງລັດຖະບານ ໂດຍສອດຄ່ອງກັບແຜນງົບປະມານແຫ່ງລັດ ໃນແຕ່ລະໄລຍະ ທີ່ສະພາແຫ່ງຊາດໄດ້ຮັບຮອງເອົາ.

### ມາດຕາ 16 ຂັ້ນຕອນການກູ້ຢືມໂດຍກົງ

ຂັ້ນຕອນການກູ້ຢືມໂດຍກົງ ສຳລັບແຜນງານ ຫຼື ໂຄງການ ໃຫ້ປະຕິບັດ ດັ່ງນີ້:

1. ກະຊວງ, ອົງການ ແລະ ອົງການປົກຄອງຂັ້ນແຂວງ ຕ້ອງສ້າງບົດວິພາກເສດຖະກິດ-ເຕັກນິກຂອງແຜນງານ ຫຼື ໂຄງການ ແລ້ວສະເໜີຕໍ່ຂະແໜງການທີ່ກ່ຽວຂ້ອງຮັບຮອງ;

2. ກະຊວງ, ອົງການ ແລະ ອົງການປົກຄອງຂັ້ນແຂວງ ສະເໜີຕໍ່ກະຊວງການເງິນ ເພື່ອປະເມີນຜົນກະທົບ ແລະ ຄວາມສ່ຽງ ຕໍ່ຖານະໜີ້ສິນສາທາລະນະ ແລະ ຢັ້ງຢືນຄວາມສາມາດໃນການກູ້ຢືມ ຕາມແຜນການກູ້ຢືມທີ່ລັດຖະບານ ແລະ ສະພາແຫ່ງຊາດຮັບຮອງ ໃນແຕ່ລະໄລຍະ;

3. ກະຊວງການເງິນ ຄົ້ນຄວ້າແຫຼ່ງທຶນ, ສັງລວມແຜນການກູ້ຢືມ ເພື່ອສະເໜີຕໍ່ລັດຖະບານ ພິຈາລະນາຕົກລົງ;

4. ກະຊວງການເງິນ ເຈລະຈາກັບຜູ້ໃຫ້ກູ້ຢືມ ຕາມການຕົກລົງຂອງລັດຖະບານ;

5. ກະຊວງການເງິນ ລາຍງານຕໍ່ລັດຖະບານ ກ່ຽວກັບຜົນການເຈລະຈາ ແລະ ຂໍອະນຸມັດເຊັນສັນຍາກູ້ຢືມ.

**ມາດຕາ 17 ທຶນຈາກການກູ້ຢືມ ໃນເງື່ອນໄຂຜ່ອນຜັນ ແລະ ໃນເງື່ອນໄຂທຸລະກິດ**

ທຶນຈາກການກູ້ຢືມໃນເງື່ອນໄຂຜ່ອນຜັນ ໃຫ້ນໍາໃຊ້ເຂົ້າໃນແຜນງານ ຫຼື ໂຄງການກໍ່ສ້າງໂຄງລ່າງພື້ນຖານ, ວຽກງານພັດທະນາຢູ່ຂົງເຂດສັງຄົມ, ການລຶບລ້າງຄວາມທຸກຍາກ ແລະ ຂົງເຂດອື່ນ ທີ່ບໍ່ສ້າງລາຍຮັບໂດຍກົງ ແລະ ບໍ່ມີຜົນຕອບແທນທາງການເງິນສູງ.

ທຶນຈາກການກູ້ຢືມໃນເງື່ອນໄຂທຸລະກິດ ໃຫ້ນໍາໃຊ້ເຂົ້າໃນສະເພາະ ແຜນງານ ຫຼື ໂຄງການ ທີ່ມີຜົນຕອບແທນທາງດ້ານເສດຖະກິດ-ການເງິນສູງ ແລະ ສາມາດສ້າງລາຍຮັບຊໍາລະໜີ້ສິນດ້ວຍຕົນເອງ.

ສໍາລັບການດຸນດ່ຽງງົບປະມານ ໃນເງື່ອນໄຂຜ່ອນຜັນ ແລະ ເງື່ອນໄຂທຸລະກິດ ຕ້ອງອີງຕາມແຜນງົບປະມານແຫ່ງລັດ ທີ່ສະພາແຫ່ງຊາດຮັບຮອງ.

## ຂ. ການອອກພັນທະບັດລັດຖະບານ

**ມາດຕາ 18 ພັນທະບັດລັດຖະບານ**

ພັນທະບັດລັດຖະບານ ແມ່ນ ເຄື່ອງມືທາງດ້ານການເງິນ ປະເພດໜີ້ ເພື່ອນໍາໃຊ້ເຂົ້າໃນການລະດົມທຶນທັງພາຍໃນ ແລະ ຕ່າງປະເທດ.

ກະຊວງການເງິນ ເປັນຜູ້ຕາງໜ້າລັດຖະບານ ໃນການອອກ, ຈໍາໜ່າຍ ພັນທະບັດ ແລະ ດໍາເນີນການຊໍາລະ ຕົ້ນທຶນ ແລະ ດອກເບ້ຍ ຕາມທີ່ໄດ້ກໍານົດໄວ້ໃນພັນທະບັດ.

ສໍາລັບການຄຸ້ມຄອງພັນທະບັດລັດຖະບານນັ້ນ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 19 ປະເພດພັນທະບັດລັດຖະບານ**

ພັນທະບັດລັດຖະບານ ປະກອບດ້ວຍ:

1. ພັນທະບັດດຸນດ່ຽງງົບປະມານແຫ່ງລັດ ຊຶ່ງແມ່ນເຄື່ອງມືທາງດ້ານການເງິນປະເພດໜີ້ ເພື່ອລະດົມທຶນດຸນດ່ຽງການຂາດດຸນງົບປະມານແຫ່ງລັດໃນແຕ່ລະປີ ແລະ ມີກໍານົດເວລາຊໍາລະຄືນນັບແຕ່ ໜຶ່ງ ປີ ຂຶ້ນໄປ;

2. ພັນທະບັດລະດົມທຶນເພື່ອການພັດທະນາ ຊຶ່ງແມ່ນ ເຄື່ອງມືທາງດ້ານການເງິນ ປະເພດໜີ້ ເພື່ອລະດົມທຶນເຂົ້າໃນການຈັດຕັ້ງປະຕິບັດໂຄງການກໍ່ສ້າງໂຄງລ່າງພື້ນຖານ ຊຶ່ງມີກໍານົດເວລາຊໍາລະຄືນທີ່ສອດຄ່ອງກັບໄລຍະຜົນຕອບແທນທາງດ້ານເສດຖະກິດ-ການເງິນຂອງການລົງທຶນ;

3. ພັນທະບັດປະກອບທຶນ ຊຶ່ງແມ່ນເຄື່ອງມືທາງດ້ານການເງິນປະເພດໜີ້ ເພື່ອປະກອບທຶນໃໝ່ໃຫ້ແກ່ລັດວິສາຫະກິດ ແລະ ທະນາຄານທຸລະກິດລັດ ແນໃສ່ປັບປຸງສະພາບຄ່ອງ ແລະ ໂຄງສ້າງທາງດ້ານການເງິນ

ໃຫ້ມີຄວາມເຂັ້ມແຂງ ຊຶ່ງມີກຳນົດເວລາຊຳລະຄືນທີ່ສອດຄ່ອງກັບຄວາມສາມາດທາງດ້ານງົບປະມານໃນແຕ່ລະໄລຍະ;

4. ພັນທະບັດຄັງເງິນ ຊຶ່ງແມ່ນເຄື່ອງມືທາງດ້ານການເງິນປະເພດໜຶ່ງ ເພື່ອລະດົມທຶນດຸນດ່ຽງສະພາບຄ່ອງຂອງຄັງເງິນ ຕາມແຜນບໍລິຫານການເງິນຂອງກະຊວງການເງິນ ແລະ ມີກຳນົດເວລາຊຳລະຄືນຕ່ຳກວ່າ ໜຶ່ງ ປີລົງມາ.

ໃນກໍລະນີຈຳເປັນ ລັດຖະບານ ອາດອອກພັນທະບັດປະເພດອື່ນ ເພື່ອແກ້ໄຂສະພາບຄ່ອງໜີ້ສິນ ແລະ ການບໍລິຫານເສດຖະກິດ ຕາມການກຳນົດອັດຕາສ່ວນໜີ້ສິນສາທາລະນະ ທີ່ສະພາແຫ່ງຊາດຮັບຮອງ ໃນແຕ່ລະໄລຍະ.

**ມາດຕາ 20 ເງື່ອນໄຂການອອກພັນທະບັດລັດຖະບານ**

ການອອກພັນທະບັດລັດຖະບານ ຕ້ອງອີງໃສ່ເງື່ອນໄຂໃດໜຶ່ງ ດັ່ງນີ້:

1. ແຜນກູ້ຢືມໄລຍະກາງ;
2. ແຜນງານ ຫຼື ໂຄງການ ທີ່ລັດຖະບານຕົກລົງ ແລະ ໄດ້ມີການກຳນົດການນຳໃຊ້ແຫຼ່ງທຶນຈາກການອອກພັນທະບັດ;
3. ແຜນປະກອບທຶນໃຫ້ລັດວິສາຫະກິດ ແລະ ທະນາຄານທຸລະກິດລັດ ທີ່ລັດຖະບານຕົກລົງ;
4. ການດຸນດ່ຽງສະພາບຄ່ອງໃຫ້ຄັງເງິນແຫ່ງຊາດ.

**ມາດຕາ 21 ການອອກພັນທະບັດ**

ການອອກພັນທະບັດ ແມ່ນ ຮູບການໜຶ່ງຂອງການກູ້ຢືມຂອງລັດຖະບານ ໃຫ້ປະຕິບັດ ດັ່ງນີ້:

1. ກະຊວງການເງິນ ຄົ້ນຄວ້າແຜນການອອກພັນທະບັດ ປະຈຳປີ ລວມທັງຈຳນວນມູນຄ່າຂອງພັນທະບັດ ເພື່ອສະເໜີລັດຖະບານພິຈາລະນາຕົກລົງຕາມອັດຕາສ່ວນໜີ້ສິນສາທາລະນະ ທີ່ສະພາແຫ່ງຊາດໄດ້ຮັບຮອງ ໃນແຕ່ລະໄລຍະ;
2. ກະຊວງການເງິນ ອອກຂໍ້ຕົກລົງວ່າດ້ວຍການອອກພັນທະບັດ.

ສຳລັບການອອກພັນທະບັດຢູ່ຕ່າງປະເທດ ຕ້ອງໄດ້ຮັບການຕົກລົງເຫັນດີຈາກລັດຖະບານ ຕາມອັດຕາສ່ວນໜີ້ສິນສາທາລະນະ ທີ່ສະພາແຫ່ງຊາດໄດ້ຮັບຮອງ ໃນແຕ່ລະໄລຍະ ແລະ ຖືກຕ້ອງຕາມກົດໝາຍຂອງ ສປປ ລາວ, ລະບຽບການ ແລະ ບັນດາເງື່ອນໄຂຂອງປະເທດທີ່ຈະຈຳໜ່າຍພັນທະບັດ.

**ມາດຕາ 22 ການຈຳໜ່າຍພັນທະບັດ**

ການຈຳໜ່າຍພັນທະບັດ ແມ່ນ ການຂາຍພັນທະບັດ ຊຶ່ງສາມາດປະຕິບັດຢູ່ ພາຍໃນ ແລະ ຕ່າງປະເທດ ດັ່ງນີ້:

1. ການຈຳໜ່າຍພັນທະບັດຢູ່ພາຍໃນປະເທດ ສາມາດດຳເນີນໂດຍກົງໃຫ້ແກ່ຜູ້ລົງທຶນ ຫຼື ຕົວແທນຈຳໜ່າຍ ໂດຍຜ່ານການປະມູນຢູ່ ທະນາຄານ ແຫ່ງ ສປປ ລາວ ຫຼື ຕະຫຼາດຫຼັກຊັບລາວ;
2. ການຈຳໜ່າຍພັນທະບັດຢູ່ຕ່າງປະເທດ ສາມາດດຳເນີນຜ່ານຕົວແທນຈຳໜ່າຍ ຕາມການຕົກລົງຂອງຜູ້ອອກພັນທະບັດ ແລະ ລະບຽບການຂອງອົງການຜູ້ຄຸ້ມຄອງການອອກພັນທະບັດຢູ່ຕ່າງປະເທດ.

**ມາດຕາ 23 ຂັ້ນຕອນການຈຳໜ່າຍພັນທະບັດຢູ່ພາຍໃນປະເທດ**

ການຈຳໜ່າຍພັນທະບັດຢູ່ພາຍໃນປະເທດ ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ກະຊວງການເງິນ ຈຳໜ່າຍພັນທະບັດ ໃຫ້ແກ່ຜູ້ລົງທຶນໂດຍກົງ ຫຼື ຕົວແທນຈຳໜ່າຍ ໂດຍຜ່ານການປະມູນຢູ່ ທະນາຄານ ແຫ່ງ ສປປ ລາວ ຫຼື ຕະຫຼາດຫຼັກຊັບລາວ;

2. ຜູ້ລົງທຶນໂດຍກົງ, ຕົວແທນຈຳໜ່າຍ ແຈ້ງການໂອນເງິນເຂົ້າບັນຊີເງິນຝາກຄັງເງິນແຫ່ງຊາດ ຢູ່ທະນາຄານ ແຫ່ງ ສປປ ລາວ;

3. ກະຊວງການເງິນ ອອກ ໃບພັນທະບັດ ຫຼື ໃບພັນທະບັດລວມ ເພື່ອມອບໃຫ້ ຜູ້ລົງທຶນໂດຍກົງ, ຕົວແທນຈຳໜ່າຍ ເພື່ອຈົດທະບຽນໃນຕະຫຼາດຫຼັກຊັບລາວ ພາຍໃນເວລາ ເຈັດວັນ ລັດຖະການ ພາຍຫຼັງທີ່ໄດ້ຮັບໃບຢັ້ງຢືນການໂອນເງິນຈາກຕົວແທນຈຳໜ່າຍ.

**ມາດຕາ 24 ຂັ້ນຕອນການຈຳໜ່າຍພັນທະບັດຢູ່ຕ່າງປະເທດ**

ການຈຳໜ່າຍພັນທະບັດຢູ່ຕ່າງປະເທດ ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ກະຊວງການເງິນ ສະເໜີ ລັດຖະບານ ເພື່ອຂໍອະນຸມັດການຈຳໜ່າຍພັນທະບັດຢູ່ຕ່າງປະເທດ;

2. ກະຊວງການເງິນ ແຈ້ງການເຖິງຄະນະກຳມະການຄຸ້ມຄອງຫຼັກຊັບ ກ່ຽວກັບການຈຳໜ່າຍພັນທະບັດຢູ່ຕ່າງປະເທດ;

3. ກະຊວງການເງິນ ແຕ່ງຕັ້ງຄະນະຄົ້ນຄວ້າ ແລະ ໂຄສະນາຂົນຂວາຍ ເພື່ອດຳເນີນການ ດັ່ງນີ້:

- ຄັດເລືອກທີ່ປຶກສາດ້ານ ການເງິນ, ກົດໝາຍ, ຕົວແທນຈຳໜ່າຍ ແລະ ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື;
- ປະສານສົມທົບກັບບໍລິສັດທີ່ປຶກສາດ້ານການເງິນ, ບໍລິສັດທີ່ປຶກສາດ້ານກົດໝາຍ ແລະ ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ ກະກຽມບັນດາເອກະສານການຈຳໜ່າຍພັນທະບັດ ຄື ໜັງສືຊວນຊື້, ສັນຍາການໃຫ້ບໍລິການທີ່ປຶກສາດ້ານການເງິນ ແລະ ດ້ານກົດໝາຍ, ສັນຍາການເປັນຕົວແທນຈຳໜ່າຍພັນທະບັດ, ສັນຍາການເປັນຕົວແທນໂອນພັນທະບັດ, ສັນຍາຕົວແທນຜູ້ຖືຄອງພັນທະບັດ, ບົດປະເມີນການຈັດລຳດັບຄວາມໜ້າເຊື່ອຖື ແລະ ເອກະສານອື່ນທີ່ກ່ຽວຂ້ອງ ໂດຍໄດ້ຮັບການຢັ້ງຢືນຄວາມຖືກຕ້ອງຈາກທີ່ປຶກສາດ້ານການເງິນ;
- ອອກໜັງສືສະແດງເຈດຈຳນົງໃນການຈຳໜ່າຍພັນທະບັດ ເຖິງພາກສ່ວນທີ່ກ່ຽວຂ້ອງຂອງຕ່າງປະເທດ ທີ່ຈະຈຳໜ່າຍພັນທະບັດ;
- ໂຄສະນາການຈຳໜ່າຍພັນທະບັດ;

4. ຕົວແທນຈຳໜ່າຍ ດຳເນີນການຕະຫຼາດ ເພື່ອເກັບກຳຄວາມຕ້ອງການຊື້ພັນທະບັດຂອງນັກລົງທຶນ ແລະ ອອກຈຳໜ່າຍພັນທະບັດຕາມແຜນ;

5. ຕົວແທນຈຳໜ່າຍ ໂອນເງິນທີ່ລະດົມໄດ້ຈາກການຈຳໜ່າຍພັນທະບັດຢູ່ຕ່າງປະເທດ ເຂົ້າບັນຊີເງິນຝາກຄັງເງິນແຫ່ງຊາດ ຢູ່ທະນາຄານ ແຫ່ງ ສປປ ລາວ.

## ໝວດທີ 2
## ການຄ້ຳປະກັນຂອງລັດຖະບານ

**ມາດຕາ 25 ການຄ້ຳປະກັນຂອງລັດຖະບານ**

ການຄ້ຳປະກັນຂອງລັດຖະບານ ແມ່ນ ການອອກໜັງສືທາງດ້ານກົດໝາຍ ເພື່ອຮັບຜິດຊອບພັນທະຈາກການຄ້ຳປະກັນການກູ້ຢືມ ແລະ ການຄ້ຳປະກັນການຊຳລະ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

**ມາດຕາ 26 ຮູບການການຄ້ຳປະກັນຂອງລັດຖະບານ**

ການຄ້ຳປະກັນຂອງລັດຖະບານ ມີ ສອງ ຮູບການ ດັ່ງນີ້:

1. ການຄ້ຳປະກັນການກູ້ຢືມ ຊຶ່ງແມ່ນ ການຄ້ຳປະກັນຂອງລັດຖະບານ ເພື່ອສ້າງເງື່ອນໄຂສະດວກໃຫ້ແກ່ ລັດວິສາຫະກິດ ຫຼື ໂຄງການລົງທຶນຂອງລັດໃນຮູບແບບການລົງທຶນທີ່ມີສ່ວນຮ່ວມ ລະຫວ່າງພາກລັດ ແລະ ເອກະຊົນ ກູ້ຢືມ ເຂົ້າໃນການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການລົງທຶນຂອງລັດທີ່ເປັນບູລິມະສິດ;

2. ການຄ້ຳປະກັນການຊຳລະ ຊຶ່ງແມ່ນ ການຄ້ຳປະກັນຂອງລັດຖະບານ ດ້ວຍການອອກໜັງສືທາງດ້ານກົດໝາຍ ເພື່ອດຳເນີນການຊຳລະແທນ ໃນກໍລະນີທີ່ລັດວິສາຫະກິດຫາກບໍ່ສາມາດປະຕິບັດພັນທະຕາມສັນຍາຊື້-ຂາຍ, ສັນຍາການສະໜອງສິນຄ້າ ຫຼື ການບໍລິການໄດ້.

**ມາດຕາ 27 ເປົ້າໝາຍການຄ້ຳປະກັນຂອງລັດຖະບານ**

ເປົ້າໝາຍການຄ້ຳປະກັນຂອງລັດຖະບານ ມີ ດັ່ງນີ້:

1. ການກູ້ຢືມຂອງລັດວິສາຫະກິດ ເພື່ອຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການລົງທຶນທີ່ເປັນບູລິມະສິດ ທີ່ຢູ່ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ມີແຫຼ່ງງົບປະມານມາຊຳລະ;

2. ການກູ້ຢືມຂອງວິສາຫະກິດ ທີ່ປະຕິບັດໂຄງການລົງທຶນຂອງລັດໃນຮູບແບບການລົງທຶນທີ່ມີສ່ວນຮ່ວມ ລະຫວ່າງພາກລັດ ແລະ ເອກະຊົນ;

3. ການຊຳລະຂອງລັດວິສາຫະກິດໃນການປະຕິບັດ ສັນຍາຊື້-ຂາຍ, ສັນຍາເຊົ່າຊື້ ແລະ ສັນຍາການສະໜອງສິນຄ້າ ຫຼື ການບໍລິການ;

4. ເປົ້າໝາຍອື່ນ ຕາມການຕົກລົງຂອງລັດຖະບານ.

**ມາດຕາ 28 ເງື່ອນໄຂການຄ້ຳປະກັນການກູ້ຢືມໃຫ້ແຜນງານ, ໂຄງການ**

ແຜນງານ, ໂຄງການ ທີ່ຂໍການຄ້ຳປະກັນການກູ້ຢືມ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນໂຄງການລົງທຶນຂອງລັດທີ່ເປັນບູລິມະສິດ ທີ່ມີຄວາມສຳຄັນສຳລັບການພັດທະນາເສດຖະກິດ-ສັງຄົມຂອງຊາດ;

2. ໂຄງການລົງທຶນຂອງລັດໃນຮູບແບບການລົງທຶນທີ່ມີສ່ວນຮ່ວມ ລະຫວ່າງພາກລັດ ແລະ ເອກະຊົນ ຕ້ອງສະເພາະແຕ່ໂຄງການບໍລິການສາທາລະນະປະໂຫຍດ ແລະ ໂຄງການທີ່ມີຜົນຕອບແທນສູງທາງດ້ານເສດຖະກິດ ໃຫ້ແກ່ການພັດທະນາປະເທດຊາດ ໂດຍການຄ້ຳປະກັນດັ່ງກ່າວ ຕ້ອງເຮັດໃຫ້ມູນຄ່າການລົງທຶນຕ່ຳກວ່າຮູບການລົງທຶນອື່ນ;

3. ມີບົດວິພາກເສດຖະກິດ-ເຕັກນິກ ທີ່ຍັ້ງຢືນໂດຍບໍລິສັດທີ່ປຶກສາສະເພາະດ້ານ ທີ່ໄດ້ຮັບການຍອມຮັບຈາກສາກົນ ແລະ ຖືກຮັບຮອງຈາກຂະແໜງການທີ່ກ່ຽວຂ້ອງ ຕາມລະບຽບການ;

4. ຢູ່ໃນແຜນກູ້ຢືມໄລຍະກາງຂອງລັດຖະບານ.

**ມາດຕາ 29 ເງື່ອນໄຂການຄ້ຳປະກັນການກູ້ຢືມໃຫ້ວິສາຫະກິດທີ່ເຂົ້າຮ່ວມໃນໂຄງການລົງທຶນຂອງລັດ**

ວິສາຫະກິດທີ່ເຂົ້າຮ່ວມໃນໂຄງການລົງທຶນຂອງລັດໃນຮູບແບບການລົງທຶນທີ່ມີສ່ວນຮ່ວມ ລະຫວ່າງພາກລັດ ແລະ ເອກະຊົນ ທີ່ສະເໜີຂໍການຄ້ຳປະກັນການກູ້ຢືມ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີຖານະການເງິນດີ, ມີຜົນກຳໄລຢ່າງໜ້ອຍ ສາມ ປີ ຕໍ່ເນື່ອງ, ໄດ້ຮັບຄວາມເຊື່ອຖືຈາກລະບົບທະນາຄານຂອງ ສປປ ລາວ, ມີບົດຮຽນ, ມີປະສົບການ ແລະ ຜົນງານດີເດັ່ນ ໃນການປະຕິບັດໂຄງການທີ່ຄ້າຍຄື

ກັນ ຊຶ່ງໄດ້ຮັບການຢັ້ງຢືນຈາກອົງການກວດສອບ ຫຼື ຜູ້ກວດສອບອິດສະລະ ທີ່ໄດ້ຮັບການຍອມຮັບຈາກສາກົນ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ;

2. ມີຊັບສິນທີ່ມີມູນຄ່າສູງກວ່າມູນຄ່າການຄໍ້າປະກັນ ສາມສິບ ສ່ວນຮ້ອຍ (30%) ມາຄໍ້າປະກັນຕໍ່ລັດຖະບານ;

3. ມີລາຍຮັບພຽງພໍໃນການຊໍາລະຕົ້ນທຶນ, ດອກເບ້ຍ ແລະ ຄ່າໃຊ້ຈ່າຍຕ່າງໆ.

### ມາດຕາ 30 ເງື່ອນໄຂການຄໍ້າປະກັນການກູ້ຢືມໃຫ້ພາກສ່ວນທຸລະກິດອື່ນ

ການຄໍ້າປະກັນການກູ້ຢືມໃຫ້ພາກສ່ວນທຸລະກິດອື່ນ ລັດຖະບານຈະພິຈາລະນາເປັນແຕ່ລະກໍລະນີ ແລ້ວນໍາສະເໜີສະພາແຫ່ງຊາດ ພິຈາລະນາຮັບຮອງ, ການຄໍ້າປະກັນດັ່ງກ່າວ ມີເງື່ອນໄຂຕົ້ນຕໍ ດັ່ງນີ້:

1. ຄໍ້າປະກັນ ໃຫ້ສະເພາະແຕ່ການກູ້ຢືມເທົ່ານັ້ນ;

2. ວິສາຫະກິດທີ່ຈະໄດ້ຮັບການຄໍ້າປະກັນຈາກລັດຖະບານ ຕ້ອງມີມູນຄ່າຊັບສິນທີ່ສາມາດຂາຍໄດ້ໃນທ້ອງຕະຫຼາດ ສູງກວ່າມູນຄ່າການຄໍ້າປະກັນ ສາມສິບ ສ່ວນຮ້ອຍ (30%) ມາຄໍ້າປະກັນຕໍ່ລັດຖະບານ;

3. ຕ້ອງເປັນຜູ້ປະຕິບັດໂຄງການທີ່ຢູ່ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ເປັນໂຄງການບູລິມະສິດທີ່ລັດຖະບານສົ່ງເສີມ, ມີຜົນຕອບແທນທາງດ້ານເສດຖະກິດ-ສັງຄົມສູງ;

4. ຜູ້ທີ່ໄດ້ຮັບການຄໍ້າປະກັນ ຕ້ອງຮັບປະກັນການຊໍາລະຄືນໃຫ້ຜູ້ໃຫ້ກູ້ຢືມ, ມີຖານະການເງິນດີ, ມີຜົນກໍາໄລຢ່າງໜ້ອຍ ສາມ ປີ ຕໍ່ເນື່ອງ, ໄດ້ຮັບຄວາມເຊື່ອຖືຈາກລະບົບທະນາຄານຂອງ ສປປ ລາວ, ມີບົດຮຽນ, ມີປະສົບການ ແລະ ຜົນງານດີເດັ່ນໃນການປະຕິບັດໂຄງການທີ່ຄ້າຍຄືກັນ ຊຶ່ງໄດ້ຮັບການຢັ້ງຢືນຈາກອົງການກວດສອບ ຫຼື ຜູ້ກວດສອບອິດສະລະ ທີ່ໄດ້ຮັບການຍອມຮັບຈາກສາກົນ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ.

ການຄໍ້າປະກັນໃຫ້ພາກສ່ວນທຸລະກິດອື່ນ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 31 ຂັ້ນຕອນການອອກໜັງສືຄໍ້າປະກັນການກູ້ຢືມ

ຜູ້ມີຈຸດປະສົງ ໃຫ້ລັດຖະບານອອກໜັງສືຄໍ້າປະກັນການກູ້ຢືມ ຕ້ອງດໍາເນີນຕາມຂັ້ນຕອນ ດັ່ງນີ້:

1. ລັດວິສາຫະກິດ ຫຼື ວິສາຫະກິດ ທີ່ໄດ້ຮັບມອບໝາຍໃຫ້ຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດໃນຮູບແບບການລົງທຶນທີ່ມີສ່ວນຮ່ວມ ລະຫວ່າງພາກລັດ ແລະ ເອກະຊົນ ສະເໜີຕໍ່ ກະຊວງ, ອົງການ ແລະ ອົງການປົກຄອງຂັ້ນແຂວງທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ ແລະ ນໍາສະເໜີກະຊວງການເງິນ;

2. ກະຊວງການເງິນ ປະເມີນຜົນກະທົບ ແລະ ຄວາມສ່ຽງ ຕໍ່ຖານະໜີ້ສິນຂອງວິສາຫະກິດ ແລະ ໜີ້ສິນສາທາລະນະ ແລະ ຢັ້ງຢືນຄວາມສາມາດໃນການກູ້ຢືມ ຕາມເພດານການກູ້ຢືມທີ່ລັດຖະບານ ແລະ ສະພາແຫ່ງຊາດຮັບຮອງ ໃນແຕ່ລະໄລຍະ;

3. ກະຊວງການເງິນ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກວດກາເງື່ອນໄຂຂອງໂຄງການ ໃຫ້ສອດຄ່ອງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 28, ມາດຕາ 29 ແລະ ມາດຕາ 30 ຂອງກົດໝາຍສະບັບນີ້;

4. ກະຊວງການເງິນ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າເງື່ອນໄຂການກູ້ຢືມ ແລະ ເຂົ້າຮ່ວມກັບລັດວິສາຫະກິດ ເພື່ອເຈລະຈາກັບຜູ້ໃຫ້ກູ້ຢືມ;

5. ກະຊວງການເງິນ ສັງລວມເຂົ້າແຜນການຄໍ້າປະກັນ ແລະ ລາຍງານ ຕໍ່ລັດຖະບານ ເພື່ອພິຈາລະນາຕົກລົງອອກໜັງສືຄໍ້າປະກັນການກູ້ຢືມ.

### ມາດຕາ 32 ເງື່ອນໄຂການຄໍ້າປະກັນການຊໍາລະ

ການຄໍ້າປະກັນການຊໍາລະໃຫ້ລັດວິສາຫະກິດ ມີເງື່ອນໄຂ ດັ່ງນີ້:

1. ເປັນໂຄງການລົງທຶນຂອງລັດລະດັບຊາດ ແລະ ເປັນໂຄງການທີ່ມີຜົນຕອບແທນສູງ ທີ່ມີຄວາມສໍາຄັນ ສໍາລັບການພັດທະນາເສດຖະກິດ-ສັງຄົມຂອງຊາດ;

2. ໂຄງການທີ່ຕ້ອງການຂໍການຄໍ້າປະກັນການຊໍາລະ ຕ້ອງມີບົດວິພາກເສດຖະກິດ-ເຕັກນິກ ທີ່ຢັ້ງຢືນໂດຍບໍລິສັດທີ່ປຶກສາສະເພາະດ້ານ ທີ່ໄດ້ຮັບການຍອມຮັບຈາກສາກົນ ແລະ ຖືກຮັບຮອງຈາກຂະແໜງການທີ່ກ່ຽວຂ້ອງ ຕາມລະບຽບການ;

3. ໂຄງການທີ່ຈະໄດ້ຮັບການຄໍ້າປະກັນການຊໍາລະ ຕ້ອງມີລາຍຮັບພຽງພໍໃນການຊໍາລະຕາມການຕົກລົງໃນສັນຍາແຕ່ລະປະເພດ ເປັນຕົ້ນ ສັນຍາຊື້-ຂາຍ ແລະ/ຫຼື ສັນຍາສະໜອງສິນຄ້າ ຫຼື ການບໍລິການ ແລະ ຄ່າໃຊ້ຈ່າຍຕ່າງໆ;

4. ຄູ່ສັນຍາຂອງຜູ້ສະເໜີຂໍການຄໍ້າປະກັນການຊໍາລະ ຕ້ອງເປັນວິສາຫະກິດ ທີ່ມີຖານະການເງິນດີ ແລະ ໄດ້ຮັບການຢັ້ງຢືນຈາກອົງການກວດສອບ ຫຼື ຜູ້ກວດສອບອິດສະລະທີ່ໄດ້ຮັບການຍອມຮັບຈາກສາກົນ ແລະ ມີຊັບສິນທີ່ມີມູນຄ່າຫຼາຍກວ່າມູນຄ່າການກູ້ຢືມ ໃນການຈັດຕັ້ງປະຕິບັດໂຄງການ ເພື່ອສະໜອງສິນຄ້າ ແລະ ການບໍລິການ ໃຫ້ຜູ້ສະເໜີຂໍການຄໍ້າປະກັນການຊໍາລະ.

### ມາດຕາ 33 ຂັ້ນຕອນການອອກໜັງສືຄໍ້າປະກັນການຊໍາລະ

ຜູ້ມີຈຸດປະສົງ ໃຫ້ລັດຖະບານອອກໜັງສືຄໍ້າປະກັນການຊໍາລະ ຕ້ອງດໍາເນີນຕາມຂັ້ນຕອນ ດັ່ງນີ້:

1. ລັດວິສາຫະກິດ ສະເໜີຕໍ່ ກະຊວງ, ອົງການ ແລະ ອົງການປົກຄອງຂັ້ນແຂວງ ທີ່ຂຶ້ນກັບ ເພື່ອຄົ້ນຄວ້າ ແລະ ນໍາສະເໜີກະຊວງການເງິນ;

2. ກະຊວງການເງິນ ປະເມີນຜົນກະທົບ ແລະ ຄວາມສ່ຽງ ຕໍ່ຖານະໜີ້ສິນຂອງລັດວິສາຫະກິດ ແລະ ໜີ້ສິນສາທາລະນະ ແລະ ຢັ້ງຢືນຄວາມສາມາດໃນການກູ້ຢືມ ຕາມແຜນການກູ້ຢືມທີ່ລັດຖະບານ ແລະ ສະພາແຫ່ງຊາດຮັບຮອງ ໃນແຕ່ລະໄລຍະ;

3. ກະຊວງການເງິນ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກວດກາເງື່ອນໄຂຂອງໂຄງການ ໃຫ້ສອດຄ່ອງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 32 ຂອງກົດໝາຍສະບັບນີ້;

4. ກະຊວງການເງິນ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າເງື່ອນໄຂການຊໍາລະ ແລະ ເຂົ້າຮ່ວມກັບລັດວິສາຫະກິດ ເພື່ອເຈລະຈາກັບຄູ່ສັນຍາທີ່ມີຈຸດປະສົງຂໍການຄໍ້າປະກັນການຊໍາລະ;

5. ກະຊວງການເງິນ ລາຍງານຕໍ່ລັດຖະບານ ພິຈາລະນາອອກໜັງສືຄໍ້າປະກັນການຊໍາລະ.

### ມາດຕາ 34 ຄວາມຮັບຜິດຊອບຂອງຜູ້ໄດ້ຮັບການຄໍ້າປະກັນ

ຜູ້ໄດ້ຮັບການຄໍ້າປະກັນ ການກູ້ຢືມ ແລະ ການຊໍາລະ ມີຄວາມຮັບຜິດຊອບ ດັ່ງນີ້:

1. ສ້າງບົດວິພາກເສດຖະກິດ-ເຕັກນິກຂອງໂຄງການຢ່າງຄົບຊຸດ ແລະ ໄດ້ຮັບການຢັ້ງຢືນຈາກບໍລິສັດທີ່ປຶກສາສະເພາະດ້ານ ທີ່ໄດ້ຮັບການຍອມຮັບຈາກສາກົນ ແລະ ຮັບຮອງຈາກຂະແໜງການທີ່ກ່ຽວຂ້ອງ ຕາມກົດໝາຍ;

2. ປະກອບເອກະສານໃຫ້ກະຊວງການເງິນ ເພື່ອດໍາເນີນການປະເມີນຕາມກົດໝາຍ;

3. ນໍາໃຊ້ທຶນ ໃຫ້ຖືກຕ້ອງຕາມເປົ້າໝາຍທີ່ໄດ້ກໍານົດໄວ້ໃນສັນຍາ ແລະ ກົດໝາຍ;

4. ຊຳລະຕົ້ນທຶນ, ດອກເບ້ຍ, ຈ່າຍຄ່າຄ້ຳປະກັນ ແລະ ຄ່າໃຊ້ຈ່າຍອື່ນໃນການຄ້ຳປະກັນ, ປະຕິບັດພັນທະອື່ນຂອງຕົນຕາມສັນຍາ;

5. ລັດວິສາຫະກິດ ຕ້ອງລາຍງານ ແຜນການດຳເນີນງານທຸລະກິດ, ຖານະການເງິນ ແລະ ແຜນຊຳລະໜີ້ສິນໃຫ້ກະຊວງການເງິນ ເປັນແຕ່ລະໄລຍະ. ໃນກໍລະນີຫາກເຫັນວ່າ ມີຄວາມສ່ຽງທີ່ຈະບໍ່ສາມາດຊຳລະໜີ້ໄດ້ຕາມແຜນ ໃຫ້ລາຍງານເປັນລາຍລັກອັກສອນຕໍ່ກະຊວງການເງິນ ທັນທີ.

ໃນກໍລະນີທີ່ນຳໃຊ້ທຶນບໍ່ຖືກເປົ້າໝາຍ, ບໍ່ສາມາດປະຕິບັດພັນທະໄດ້ຢ່າງຄົບຖ້ວນ ຫຼື ຕາມກຳນົດເວລາ ຊຶ່ງກໍ່ໃຫ້ເກີດຜົນເສຍຫາຍ ຕ້ອງທົດແທນຄືນໃຫ້ຜູ້ຄ້ຳປະກັນ ພ້ອມທັງປະຕິບັດຕາມມາດຕະການແກ້ໄຂຂອງລັດຖະບານ ແລະ ຕ້ອງມີຄວາມຮັບຜິດຊອບຕາມກົດໝາຍ.

## ພາກທີ IV
## ການນຳໃຊ້ທຶນທີ່ໄດ້ຈາກການກູ້ຢືມ
### ໝວດທີ 1
### ການນຳໃຊ້ທຶນ

**ມາດຕາ 35 ການນຳໃຊ້ທຶນ ເຂົ້າໃນການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການ**

ກະຊວງ, ອົງການ, ອົງການປົກຄອງຂັ້ນແຂວງ, ລັດວິສາຫະກິດ ແລະ ພາກສ່ວນທຸລະກິດອື່ນ ທີ່ໄດ້ຮັບທຶນຈາກການກູ້ຢືມ ຫຼື ການກູ້ຢືມໂດຍມີການຄ້ຳປະກັນ ຕ້ອງນຳໃຊ້ທຶນເຂົ້າໃນການປະຕິບັດແຜນງານ ຫຼື ໂຄງການ ໃຫ້ຖືກຕ້ອງຕາມເປົ້າໝາຍ ແລະ ເງື່ອນໄຂຂອງສັນຍາ.

ກະຊວງການເງິນ ສັງລວມບັນຊີລາຍຊື່ແຜນງານ ແລະ ໂຄງການ ທີ່ນຳໃຊ້ເງິນກູ້ຢືມ ແຕ່ລະປີງົບປະມານ ຄັດຕິດກັບແຜນງົບປະມານແຫ່ງລັດ ທີ່ສະເໜີສະພາແຫ່ງຊາດຮັບຮອງ.

**ມາດຕາ 36 ການນຳໃຊ້ທຶນ ເພື່ອດຸນດ່ຽງງົບປະມານແຫ່ງລັດ**

ກະຊວງການເງິນ ນຳໃຊ້ແຫຼ່ງທຶນຈາກ ການກູ້ຢືມ ແລະ ການອອກພັນທະບັດ ເຂົ້າໃນການດຸນດ່ຽງງົບປະມານແຫ່ງລັດ ຕາມແຜນທີ່ສະພາແຫ່ງຊາດຮັບຮອງ.

**ມາດຕາ 37 ການນຳໃຊ້ທຶນ ເພື່ອດຸນດ່ຽງສະພາບຄ່ອງຄັງເງິນ**

ກະຊວງການເງິນ ອອກພັນທະບັດຄັງເງິນແຫ່ງຊາດ ເພື່ອດຸນດ່ຽງສະພາບຄ່ອງຂອງຄັງເງິນ ເຂົ້າໃນການບໍລິຫານແຫຼ່ງເງິນໃນລະບົບຄັງເງິນ ຕາມແຜນການທີ່ສະພາແຫ່ງຊາດຮັບຮອງ ເພື່ອຮັບປະກັນໃຫ້ການປະຕິບັດລາຍຈ່າຍພາຍໃນປີງົບປະມານ.

## ໝວດທີ 2
## ການໃຫ້ກູ້ຢືມຕໍ່

**ມາດຕາ 38 ການໃຫ້ກູ້ຢືມຕໍ່**

ການໃຫ້ກູ້ຢືມຕໍ່ ແມ່ນ ການນຳໃຊ້ເງິນກູ້ຢືມທີ່ລັດຖະບານໄດ້ກູ້ຢືມ ໃຫ້ລັດວິສາຫະກິດ, ສະຖາບັນການເງິນຂອງລັດ ກູ້ຢືມຕໍ່ ເພື່ອລົງທຶນເຂົ້າໃນໂຄງການທີ່ມີຜົນຕອບແທນສູງທາງດ້ານເສດຖະກິດ-ການເງິນ ແລະ ຜູ້ກູ້ຢືມຕໍ່ນັ້ນ ຕ້ອງຊຳລະໜີ້ສິນໃຫ້ຄືນຖ້ວນຕາມສັນຍາກູ້ຢືມຕໍ່.

ກະຊວງການເງິນ ເປັນຜູ້ຄຸ້ມຄອງການໃຫ້ກູ້ຢືມຕໍ່ ໃນຖານະເປັນຜູ້ຕາງໜ້າລັດຖະບານ.

ການໃຫ້ກູ້ຢືມຕໍ່ ຕ້ອງຢູ່ໃນແຜນງົບປະມານປະຈຳປີ ທີ່ສະພາແຫ່ງຊາດຮັບຮອງ, ກໍລະນີການໃຫ້ກູ້ຢືມຕໍ່ຫາກບໍ່ຢູ່ໃນແຜນທີ່ສະພາແຫ່ງຊາດຮັບຮອງ, ລັດຖະບານ ຕ້ອງຄົ້ນຄວ້າເປັນສະເພາະແລ້ວ ນຳສະເໜີສະພາແຫ່ງຊາດ ພິຈາລະນາຮັບຮອງ.

**ມາດຕາ 39 ເປົ້າໝາຍການໃຫ້ກູ້ຢືມຕໍ່**

ເປົ້າໝາຍການໃຫ້ກູ້ຢືມຕໍ່ ມີ ດັ່ງນີ້:

1. ສະໜັບສະໜູນການລົງທຶນຂອງລັດວິສາຫະກິດ ທີ່ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
2. ສະໜັບສະໜູນສະຖາບັນການເງິນຂອງລັດ ໃນການປ່ອຍສິນເຊື່ອ ເຂົ້າໃນເປົ້າໝາຍການພັດທະນາ ແລະ ລຶບລ້າງຄວາມທຸກຍາກ ຕາມນະໂຍບາຍຂອງລັດ;
3. ເພີ່ມຄວາມໝັ້ນຄົງທາງດ້ານການເງິນຂອງ ລັດວິສາຫະກິດ ແລະ ສະຖາບັນການເງິນຂອງລັດ;
4. ແກ້ໄຂສະພາບຄ່ອງຂອງ ລັດວິສາຫະກິດ ແລະ ສະຖາບັນການເງິນຂອງລັດ ຕາມການຕົກລົງຂອງລັດຖະບານ.

**ມາດຕາ 40 ເງື່ອນໄຂການໃຫ້ກູ້ຢືມຕໍ່**

ການໃຫ້ກູ້ຢືມຕໍ່ ມີເງື່ອນໄຂ ດັ່ງນີ້:

1. ແຜນງານ ຫຼື ໂຄງການ ທີ່ຢູ່ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ເປັນໂຄງການບູລິມະສິດທີ່ລັດຖະບານສົ່ງເສີມ, ມີຜົນຕອບແທນທາງດ້ານເສດຖະກິດ-ສັງຄົມສູງ ແລະ ສອດຄ່ອງກັບເງື່ອນໄຂຂອງຜູ້ໃຫ້ທຶນ;
2. ສຳເລັດການດຳເນີນຂັ້ນຕອນກະກຽມແຜນງານ ຫຼື ໂຄງການ ຕາມກົດໝາຍ ແລະ ລະບຽບການ;
3. ແຜນງານ ຫຼື ໂຄງການ ທີ່ຕ້ອງການຂໍການກູ້ຢືມຕໍ່ ຕ້ອງມີບົດວິພາກເສດຖະກິດ-ເຕັກນິກ ທີ່ຍັ້ງຢືນໂດຍບໍລິສັດທີ່ປຶກສາສະເພາະດ້ານ ທີ່ໄດ້ຮັບການຍອມຮັບຈາກສາກົນ ແລະ ຖືກຮັບຮອງຈາກຂະແໜງການທີ່ກ່ຽວຂ້ອງ ຕາມລະບຽບການ;
4. ແຜນງານ ຫຼື ໂຄງການອື່ນ ທີ່ລັດຖະບານຕົກລົງ ຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

**ມາດຕາ 41 ເງື່ອນໄຂຂອງຜູ້ກູ້ຢືມຕໍ່**

ຜູ້ກູ້ຢືມຕໍ່ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີບົດວິພາກເສດຖະກິດ-ເຕັກນິກຂອງ ແຜນງານ ຫຼື ໂຄງການ ຢ່າງຄົບຊຸດ;

2. ມີຄວາມສາມາດໃນການຈັດຕັ້ງປະຕິບັດ ແຜນງານ ຫຼື ໂຄງການ ແລະ ການຊໍາລະຄືນ ໂດຍສອດຄ່ອງກັບແຜນການເງິນຕາມສັນຍາ;

3. ມີຖານະການເງິນດີ, ມີຜົນກໍາໄລຢ່າງໜ້ອຍ ສາມ ປີ ຕໍ່ເນື່ອງ, ໄດ້ຮັບຄວາມເຊື່ອຖືຈາກລະບົບທະນາຄານຂອງ ສປປ ລາວ ແລະ ຮັບປະກັນການຊໍາລະຄືນໃຫ້ລັດຖະບານ;

4. ປະຕິບັດກົດໝາຍຢ່າງເຂັ້ມງວດ.

**ມາດຕາ 42 ຄວາມຮັບຜິດຊອບຂອງຜູ້ໃຫ້ກູ້ຢືມຕໍ່**

ກະຊວງການເງິນ ຕາງໜ້າໃຫ້ລັດຖະບານ ໃນຖານະເປັນຜູ້ໃຫ້ກູ້ຢືມຕໍ່ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຕິດຕາມ ກວດກາ ການນໍາໃຊ້ ແລະ ການຖືບັນຊີເງິນກູ້ຢືມຕໍ່ຂອງຜູ້ກູ້ຢືມຕໍ່ ໃນແຕ່ລະແຜນງານ ຫຼື ໂຄງການ;

2. ແກ້ໄຂໃນກໍລະນີທີ່ຜູ້ກູ້ຢືມຕໍ່ ນໍາໃຊ້ເງິນ ບໍ່ຖືກຕ້ອງຕາມເປົ້າໝາຍ;

3. ຂຶ້ນແຜນ ແລະ ເກັບກູ້ ຕົ້ນທຶນ, ດອກເບ້ຍ ແລະ ຄ່າໃຊ້ຈ່າຍຕ່າງໆ ຈາກຜູ້ກູ້ຢືມຕໍ່ຕາມສັນຍາ;

4. ສະຫຼຸບ ແລະ ປະເມີນຜົນກ່ຽວກັບວຽກງານໃຫ້ກູ້ຢືມຕໍ່ ແລ້ວລາຍງານຕໍ່ລັດຖະບານ ແຕ່ລະໄລຍະ.

ໃນກໍລະນີທີ່ ກະຊວງການເງິນ ມອບສິດໃຫ້ສະຖາບັນການເງິນຂອງລັດ ເປັນຜູ້ໃຫ້ກູ້ຢືມຕໍ່ແທນຕົນນັ້ນ, ການຈັດຕັ້ງດັ່ງກ່າວ ຕ້ອງເປັນຜູ້ລາຍງານການກູ້ຢືມຕໍ່ນັ້ນ ໃຫ້ກະຊວງການເງິນ.

**ມາດຕາ 43 ຄວາມຮັບຜິດຊອບຂອງຜູ້ກູ້ຢືມຕໍ່**

ຜູ້ກູ້ຢືມຕໍ່ ມີຄວາມຮັບຜິດຊອບ ດັ່ງນີ້:

1. ປະກອບເອກະສານໃຫ້ກະຊວງການເງິນ ເພື່ອດໍາເນີນການປະເມີນຕາມລະບຽບການ;

2. ນໍາໃຊ້ທຶນກູ້ຢືມຕໍ່ ໃຫ້ຖືກຕ້ອງຕາມເປົ້າໝາຍທີ່ໄດ້ກໍານົດໄວ້ໃນສັນຍາກູ້ຢືມຕໍ່;

3. ປະຕິບັດການຈັດຊື້-ຈັດຈ້າງ ແລະ ຖືບັນຊີເງິນທີ່ກູ້ຢືມຕໍ່ ໃຫ້ຖືກຕ້ອງຕາມກົດໝາຍ;

4. ຊໍາລະຕົ້ນທຶນ, ດອກເບ້ຍ ແລະ ຄ່າໃຊ້ຈ່າຍຕ່າງໆ ຢ່າງຄົບຖ້ວນຕາມສັນຍາກູ້ຢືມຕໍ່ ໃນກໍລະນີບໍ່ສາມາດຊໍາລະ ກໍຕ້ອງຍອມຮັບມາດຕະການເກັບກູ້ໜີ້ສິນ ແລະ ຄວາມຮັບຜິດຊອບອື່ນທີ່ກ່ຽວຂ້ອງ ຕາມການສະເໜີຂອງກະຊວງການເງິນ;

5. ລາຍງານການຈັດຕັ້ງປະຕິບັດການນໍາໃຊ້ເງິນກູ້ຢືມຕໍ່ ໃຫ້ກະຊວງການເງິນ ແລະ ອົງການທີ່ກ່ຽວຂ້ອງເປັນແຕ່ລະໄລຍະ.

## ພາກທີ V
## ປະເພດ ແລະ ການຊໍາລະ ໜີ້ສິນສາທາລະນະ

**ມາດຕາ 44 ປະເພດໜີ້ສິນສາທາລະນະ**

ໜີ້ສິນສາທາລະນະ ມີ ສອງ ປະເພດ ຄື ໜີ້ສິນພາຍໃນ ແລະ ໜີ້ສິນຕ່າງປະເທດ.

ໜີ້ສິນພາຍໃນ ແມ່ນ ສ່ວນໜຶ່ງຂອງໜີ້ສິນສາທາລະນະ ທີ່ເກີດຈາກການນໍາໃຊ້ເຄື່ອງມືໜີ້ສິນ ທີ່ເປັນສະກຸນເງິນກີບຢູ່ ພາຍໃນ ແລະ ຕ່າງປະເທດ ຕາມສັນຍາເງິນກູ້ ແລະ ສັນຍາຄໍ້າປະກັນ.

ໜີ້ສິນຕ່າງປະເທດ ແມ່ນ ສ່ວນໜຶ່ງຂອງໜີ້ສິນສາທາລະນະ ທີ່ເກີດຈາກການນໍາໃຊ້ເຄື່ອງມືໜີ້ສິນ ທີ່ເປັນສະກຸນເງິນຕາຕ່າງປະເທດຢູ່ ພາຍໃນ ແລະ ຕ່າງປະເທດ ຕາມສັນຍາເງິນກູ້ ແລະ ສັນຍາຄໍ້າປະກັນ.

### ມາດຕາ 45 ບັນຊີທຶນສໍາຮອງໜີ້ສິນສາທາລະນະ

ກະຊວງການເງິນ ສ້າງບັນຊີທຶນສໍາຮອງໜີ້ສິນສາທາລະນະ ໃນລະບົບງົບປະມານແຫ່ງລັດ ຊຶ່ງປະກອບດ້ວຍ ບັນຊີທຶນສໍາຮອງໜີ້ສິນຕ່າງປະເທດ ແລະ ບັນຊີທຶນສໍາຮອງໜີ້ສິນພາຍໃນ.

ບັນຊີທຶນສໍາຮອງ ໜີ້ສິນຕ່າງປະເທດ ແລະ ໜີ້ສິນພາຍໃນ ສ້າງຂຶ້ນເພື່ອບໍລິຫານສະພາບຄ່ອງຊົ່ວຄາວໃນການຊໍາລະ ຕົ້ນທຶນ, ດອກເບ້ຍ ແລະ ພັນທະອື່ນ ທີ່ເກີດຈາກ ການກູ້ຢືມ, ການຄໍ້າປະກັນ, ພັນທະບັດ ຕ່າງປະເທດ ແລະ ພາຍໃນ ແລະ ລາຍຈ່າຍບັງເອີນ ໃຫ້ທັນຕາມເວລາທີ່ໄດ້ກໍານົດໄວ້ໃນສັນຍາ. ແຫຼ່ງທຶນຂອງບັນຊີທຶນສໍາຮອງໜີ້ສິນດັ່ງກ່າວ ໄດ້ມາຈາກ ຕົ້ນທຶນທີ່ເກັບກູ້ຄືນຈາກການໃຫ້ກູ້ຢືມຕໍ່, ຄ່າຄໍ້າປະກັນ, ການປັບໃໝ, ຄ່າບໍລິການ, ແຫຼ່ງດຸນດ່ຽງ ແລະ ແຫຼ່ງລາຍຮັບອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

ສໍາລັບລະບຽບໃນການເກັບ ຄ່າຄໍ້າປະກັນ, ການປັບໃໝ, ຄ່າບໍລິການ ກ່ຽວກັບວຽກງານຄຸ້ມຄອງໜີ້ສິນສາທາລະນະ ແລະ ການຄຸ້ມຄອງບັນຊີທຶນສໍາຮອງໜີ້ສິນສາທາລະນະ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 46 ການຊໍາລະໜີ້ສິນສາທາລະນະ

ໃນແຕ່ລະປີ ກະຊວງການເງິນ ຕ້ອງຈັດສັນລາຍຈ່າຍງົບປະມານ ແລະ ແຫຼ່ງທຶນດຸນດ່ຽງ ໃຫ້ພຽງພໍເພື່ອປະຕິບັດການຊໍາລະ ຕົ້ນທຶນ, ດອກເບ້ຍ ແລະ ພັນທະອື່ນ ທີ່ເກີດຈາກ ການກູ້ຢືມ, ການຄໍ້າປະກັນ ແລະ ການອອກເຄື່ອງມືໜີ້ສິນອື່ນທັງ ພາຍໃນ ແລະ ຕ່າງປະເທດ ຕາມທີ່ໄດ້ກໍານົດໄວ້ໃນສັນຍາ.

ດອກເບ້ຍ ແລະ ພັນທະອື່ນ ໃຫ້ຈັດສັນເຂົ້າໃນແຜນລາຍຈ່າຍງົບປະມານແຫ່ງລັດ.

ຕົ້ນທຶນ ເງິນກູ້ຢືມ ແລະ ພັນທະບັດ ໃຫ້ຈັດສັນເຂົ້າໃນແຜນດຸນດ່ຽງງົບປະມານແຫ່ງລັດ.

### ມາດຕາ 47 ການຊໍາລະໜີ້ສິນຂອງຜູ້ກູ້ຢືມຕໍ່

ລັດວິສາຫະກິດ, ສະຖາບັນການເງິນຂອງລັດ ທີ່ກູ້ຢືມຕໍ່ ຕ້ອງຊໍາລະ ຕົ້ນທຶນ, ດອກເບ້ຍ ແລະ ຄ່າໃຊ້ຈ່າຍອື່ນ ໃຫ້ກະຊວງການເງິນ ຕາມພັນທະທີ່ໄດ້ກໍານົດໄວ້ໃນສັນຍາຢ່າງຄົບຖ້ວນ ແລະ ສອດຄ່ອງກັບແຜນເກັບກູ້ໜີ້ສິນແຕ່ລະປີ.

ລັດວິສາຫະກິດ, ສະຖາບັນການເງິນຂອງລັດ ຕ້ອງມີບັນຊີສະເພາະ ເພື່ອສະສົມທຶນໃຫ້ພຽງພໍສໍາລັບການຊໍາລະພັນທະຕ່າງໆ.

### ມາດຕາ 48 ການຊໍາລະໜີ້ສິນຂອງຜູ້ໄດ້ຮັບການຄໍ້າປະກັນ

ລັດວິສາຫະກິດ ທີ່ໄດ້ຮັບການຄໍ້າປະກັນ ຊຶ່ງລັດຖະບານ ໄດ້ປະຕິບັດພັນທະຕາມສັນຍາຄໍ້າປະກັນແລ້ວນັ້ນ, ລັດວິສາຫະກິດດັ່ງກ່າວ ຕ້ອງໄດ້ທົດແທນຄືນໃຫ້ລັດຖະບານ ຢ່າງຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ໃນສັນຍາ.

# ພາກທີ VI
# ຖານຂໍ້ມູນ ແລະ ການລາຍງານ ໜີ້ສິນສາທາລະນະ

**ມາດຕາ 49 ການສ້າງຖານຂໍ້ມູນໜີ້ສິນສາທາລະນະ**

ກະຊວງການເງິນ ເປັນຜູ້ຮັບຜິດຊອບ ສ້າງ ແລະ ຄຸ້ມຄອງ ຖານຂໍ້ມູນໜີ້ສິນສາທາລະນະ ຢ່າງລວມສູນ ແລະ ສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີ.

ກະຊວງ, ອົງການ, ອົງການປົກຄອງຂັ້ນແຂວງ, ລັດວິສາຫະກິດ ແລະ ພາກສ່ວນທຸລະກິດອື່ນທີ່ກ່ຽວຂ້ອງ ມີພັນທະໃນການລາຍງານຂໍ້ມູນໜີ້ສິນຂອງຕົນ ໃຫ້ກະຊວງການເງິນ.

**ມາດຕາ 50 ການສັງລວມຂໍ້ມູນໜີ້ສິນສາທາລະນະ**

ກະຊວງການເງິນ ເປັນເຈົ້າການປະສານສົມທົບກັບ ກະຊວງແຜນການ ແລະ ການລົງທຶນ, ທະນາຄານແຫ່ງ ສປປ ລາວ ແລະ ຜູ້ໃຫ້ກູ້ຢືມ ເພື່ອເກັບກຳຂໍ້ມູນທີ່ຕິດພັນກັບໜີ້ສິນສາທາລະນະ.

ລັດວິສາຫະກິດ ແລະ ພາກສ່ວນທຸລະກິດອື່ນທີ່ກ່ຽວຂ້ອງ ຕ້ອງລາຍງານຂໍ້ມູນ ທີ່ຕິດພັນກັບການກູ້ຢືມ, ການອອກພັນທະບັດ, ການຄ້ຳປະກັນ ແລະ ຂໍ້ມູນອື່ນທີ່ກ່ຽວຂ້ອງກັບໜີ້ສິນສາທາລະນະ ເພື່ອສັງລວມໃຫ້ເປັນລະບົບຄົບຊຸດ ສົ່ງໃຫ້ກະຊວງການເງິນ.

**ມາດຕາ 51 ການລາຍງານຂໍ້ມູນໜີ້ສິນສາທາລະນະ**

ກະຊວງການເງິນ ສະຫຼຸບ ສັງລວມຂໍ້ມູນ, ຖານະໜີ້ສິນສາທາລະນະ ແລະ ຄວາມສ່ຽງຂອງໜີ້ສິນດັ່ງກ່າວ ແລ້ວລາຍງານລັດຖະບານ ເພື່ອລາຍງານຕໍ່ສະພາແຫ່ງຊາດ.

**ມາດຕາ 52 ການເຜີຍແຜ່ຂໍ້ມູນໜີ້ສິນສາທາລະນະ**

ກະຊວງການເງິນ ສະໜອງ ແລະ ເຜີຍແຜ່ຂໍ້ມູນ ກ່ຽວກັບໜີ້ສິນສາທາລະນະ ຕາມມາດຕະຖານ ແລະ ລະບຽບການ ໃນແຕ່ລະໄລຍະ, ສະໜອງຂໍ້ມູນໜີ້ສິນສາທາລະນະ ໃຫ້ອົງການຈັດຕັ້ງສາກົນ ຕາມພັນທະຂອງ ສປປ ລາວ.

# ພາກທີ VII
# ຄວາມຮັບຜິດຊອບຂອງອົງການລັດ ທີ່ພົວພັນກັບໜີ້ສິນສາທາລະນະ

**ມາດຕາ 53 ຄວາມຮັບຜິດຊອບຂອງສະພາແຫ່ງຊາດ**

ສະພາແຫ່ງຊາດ ມີຄວາມຮັບຜິດຊອບຕົ້ນຕໍ ດັ່ງນີ້:

1. ພິຈາລະນາ ແລະ ຮັບຮອງເອົາ ແຜນຍຸດທະສາດການຄຸ້ມຄອງໜີ້ສິນສາທາລະນະ ຕາມການສະເໜີຂອງລັດຖະບານ;
2. ພິຈາລະນາ ແລະ ຮັບຮອງເອົາ ອັດຕາສ່ວນໜີ້ສິນສາທາລະນະ ພ້ອມກັບແຜນງົບປະມານແຫ່ງລັດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຫ້າ ປີ ແລະ ໃນແຕ່ລະປີ;

3. ພິຈາລະນາ ແລະ ຮັບຮອງເອົາ ບົດລາຍງານກ່ຽວກັບໜີ້ສິນສາທາລະນະ ຕາມການສະເໜີຂອງລັດຖະບານ;

4. ພິຈາລະນາ ແລະ ຮັບຮອງເອົາ ການກູ້ຢືມສຳລັບໂຄງການລົງທຶນຂອງລັດລະດັບຊາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການລົງທຶນຂອງລັດ.

**ມາດຕາ 54 ຄວາມຮັບຜິດຊອບຂອງສະພາປະຊາຊົນຂັ້ນແຂວງ**

ສະພາປະຊາຊົນຂັ້ນແຂວງ ມີຄວາມຮັບຜິດຊອບ ດັ່ງນີ້:

1. ພິຈາລະນາຮັບຮອງ ແຜນງານ ແລະ ໂຄງການລົງທຶນຂອງລັດ ທີ່ຕິດພັນກັບການກູ້ຢືມ, ແຜນທຶນສົມທົບຂອງລັດຖະບານ ເຂົ້າໃນການຈັດຕັ້ງປະຕິບັດແຜນງານ ແລະ ໂຄງການ ທີ່ຕ້ອງການນຳໃຊ້ທຶນກູ້ຢືມຢູ່ທ້ອງຖິ່ນຕົນ ຕາມການສະເໜີຂອງອົງການປົກຄອງຂັ້ນແຂວງ;

2. ຊຸກຍູ້, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດໂຄງການ ທີ່ນຳໃຊ້ທຶນກູ້ຢືມຢູ່ທ້ອງຖິ່ນຕົນໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 55 ຄວາມຮັບຜິດຊອບຂອງລັດຖະບານ**

ລັດຖະບານ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຄົ້ນຄວ້າແຜນຍຸດທະສາດການຄຸ້ມຄອງໜີ້ສິນສາທາລະນະ ຕາມການສະເໜີຂອງກະຊວງການເງິນ ເພື່ອສະເໜີສະພາແຫ່ງຊາດ ພິຈາລະນາຮັບຮອງ;

2. ຄົ້ນຄວ້າ ອັດຕາສ່ວນໜີ້ສິນສາທາລະນະ ພ້ອມກັບແຜນງົບປະມານແຫ່ງລັດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຫ້າ ປີ ແລະ ໃນແຕ່ລະປີ ເພື່ອສະເໜີສະພາແຫ່ງຊາດ ພິຈາລະນາຮັບຮອງ;

3. ຮັບຮອງແຜນການ ອອກ ແລະ ຈຳໜ່າຍພັນທະບັດ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການສະເໜີຂອງກະຊວງການເງິນ;

4. ຮັບຮອງເອົາແຜນບັນຊີ ແຜນງານ ແລະ ໂຄງການ ສຳລັບການກູ້ຢືມ ແລະ ການຄ້ຳປະກັນ ປະຈຳປີ;

5. ຮັບຮອງເອົາແຜນການຊຳລະຕົ້ນທຶນ, ດອກເບ້ຍ ແລະ ຄ່າໃຊ້ຈ່າຍຕ່າງໆ;

6. ພິຈາລະນາການກູ້ຢືມໃຫ້ບັນດາໂຄງການ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການລົງທຶນຂອງລັດ;

7. ພິຈາລະນາ ການຄ້ຳປະກັນການກູ້ຢືມ ແລະ ການໃຫ້ກູ້ຢືມຕໍ່ ແກ່ພາກສ່ວນທຸລະກິດອື່ນ ເພື່ອສະເໜີສະພາແຫ່ງຊາດ ພິຈາລະນາຮັບຮອງ;

8. ຮັບຮອງການຄ້ຳປະກັນການກູ້ຢືມແກ່ ໂຄງການລົງທຶນຂອງລັດໃນຮູບແບບການລົງທຶນທີ່ມີສ່ວນຮ່ວມ ລະຫວ່າງພາກລັດ ແລະ ເອກະຊົນ;

9. ຮັບຮອງເອົາຜົນການເຈລະຈາ ແລະ ອະນຸມັດການເຊັນສັນຍາກູ້ຢືມ, ການອອກໜັງສືການຄ້ຳປະກັນ ແລະ/ຫຼື ການອອກເຄື່ອງມືໜີ້ສິນອື່ນ ຕາມການສະເໜີຂອງກະຊວງການເງິນ;

10. ຮັບຮອງເອົາແຜນບໍລິຫານສະພາບຄ່ອງໜີ້ສິນ ແລະ ນະໂຍບາຍໜີ້ສິນອື່ນ ຕາມການສະເໜີຂອງກະຊວງການເງິນ;

11. ຄົ້ນຄວ້າ ແລະ ຮັບຮອງເອົາບົດລາຍງານໜີ້ສິນສາທາລະນະ ປະຈຳປີຂອງກະຊວງການເງິນ ເພື່ອນຳສະເໜີສະພາແຫ່ງຊາດ ພິຈາລະນາ ແລະ ຮັບຮອງ;

12. ຕ້ອງມີຄວາມຮັບຜິດຊອບຕໍ່ໜີ້ສິນທີ່ຕົນສ້າງຂຶ້ນຕາມກົດໝາຍ.

**ມາດຕາ 56 ຄວາມຮັບຜິດຊອບຂອງກະຊວງການເງິນ**

ກະຊວງການເງິນ ມີຄວາມຮັບຜິດຊອບ ດັ່ງນີ້:

1. ເປັນເສນາທິການ ໃຫ້ລັດຖະບານໃນການຄຸ້ມຄອງໜີ້ສິນສາທາລະນະ ຢ່າງລວມສູນ;
2. ຄົ້ນຄວ້າອັດຕາສ່ວນໜີ້ສິນສາທາລະນະ ແລ້ວສະເໜີລັດຖະບານ;
3. ຄົ້ນຄວ້າແຜນຍຸດທະສາດການຄຸ້ມຄອງໜີ້ສິນສາທາລະນະ ເພື່ອນໍາສະເໜີຕໍ່ລັດຖະບານ;
4. ສັງລວມບັນຊີ ແຜນງານ ແລະ ໂຄງການສໍາລັບການກູ້ຢືມ ແລະ ການຄໍ້າປະກັນ ປະຈໍາປີ ໂດຍແຍກອອກເປັນ ການກູ້ຢືມໃນເງື່ອນໄຂຜ່ອນຜັນ, ການກູ້ຢືມໃນເງື່ອນໄຂທຸລະກິດ, ການກູ້ຢືມພາຍໃນ, ການກູ້ຢືມຕ່າງປະເທດ ແລະ ການກູ້ຢືມອື່ນ ແລ້ວສະເໜີລັດຖະບານ ພິຈາລະນາຕົກລົງ;
5. ວິເຄາະ, ວິໄຈຖານະໜີ້ສິນສາທາລະນະ, ຄວາມປອດໄພ ແລະ ຄວາມສ່ຽງ ເພື່ອກໍານົດນະໂຍບາຍ ແລະ ທິດທາງການຄຸ້ມຄອງໜີ້ສິນສາທາລະນະ ໃຫ້ມີຄວາມປອດໄພ, ຕົ້ນທຶນຕໍ່າ ແລະ ບໍ່ມີຜົນກະທົບຕໍ່ເສດຖະກິດມະຫາພາກ;
6. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຊອກຫາແຫຼ່ງທຶນ, ລະດົມທຶນ ແລະ ເຂົ້າຮ່ວມແຕ່ຫົວທີ ໃນການກະກຽມແຜນງານ, ໂຄງການ, ເຈລະຈາກັບຜູ້ໃຫ້ກູ້ຢືມ ພ້ອມທັງລາຍງານຜົນການເຈລະຈາ ແລະ ສະເໜີຂໍອະນຸມັດການເຊັນສັນຍາ ເພື່ອໃຫ້ລັດຖະບານ ພິຈາລະນາຕົກລົງ;
7. ອອກ ແລະ ຈໍາໜ່າຍພັນທະບັດ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການຕົກລົງຂອງລັດຖະບານ;
8. ກູ້ຢືມພາຍໃນ ແລະ ອອກພັນທະບັດຄັງເງິນ ໄລຍະສັ້ນ ເພື່ອບໍລິຫານສະພາບຄ່ອງງົບປະມານ;
9. ຄົ້ນຄວ້າການຄໍ້າປະກັນການກູ້ຢືມ ແກ່ໂຄງການລົງທຶນຂອງລັດໃນຮູບແບບການລົງທຶນທີ່ມີສ່ວນຮ່ວມ ລະຫວ່າງພາກລັດ ແລະ ເອກະຊົນ ເພື່ອສະເໜີລັດຖະບານ ພິຈາລະນາຕົກລົງ;
10. ຄົ້ນຄວ້າການຄໍ້າປະກັນການກູ້ຢືມ ແລະ ການໃຫ້ກູ້ຢືມຕໍ່ ແກ່ພາກສ່ວນທຸລະກິດອື່ນ ເພື່ອສະເໜີລັດຖະບານ ພິຈາລະນານໍາສະເໜີຕໍ່ ສະພາແຫ່ງຊາດ;
11. ສັງລວມທຸກການກູ້ຢືມ ຫຼື ການອອກພັນທະບັດ ຢູ່ພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຮັບການຄໍ້າປະກັນຂອງລັດຖະບານ ໃຫ້ລວມສູນຢູ່ກະຊວງການເງິນ;
12. ຕິດຕາມ ກວດກາ ແລະ ສະຫຼຸບ ການຈັດຕັ້ງປະຕິບັດໂຄງການທີ່ນໍາໃຊ້ທຶນກູ້ຢືມ, ການອອກໜັງສືຄໍ້າປະກັນ ແລະ/ຫຼື ການອອກເຄື່ອງມືໜີ້ສິນອື່ນ ແລ້ວລາຍງານລັດຖະບານ ໃນແຕ່ລະໄລຍະ;
13. ສ້າງແຜນການຊໍາລະໜີ້ສິນທັງພາຍໃນ ແລະ ຕ່າງປະເທດ ໄລຍະຍາວ, ໄລຍະກາງ ແລະ ໄລຍະສັ້ນ ເພື່ອສະເໜີລັດຖະບານ ພິຈາລະນາ;
14. ປະຕິບັດການຊໍາລະໜີ້ສິນທັງພາຍໃນ ແລະ ຕ່າງປະເທດ ຕາມເວລາທີ່ໄດ້ກໍານົດໄວ້ໃນສັນຍາ;
15. ເກັບກູ້ຕົ້ນທຶນ ແລະ ດອກເບ້ຍຈາກການໃຫ້ກູ້ຢືມຕໍ່ ຕາມສັນຍາກູ້ຢືມຕໍ່ ແລະ ຕາມກົດໝາຍ;
16. ຕ້ອງມີຄວາມຮັບຜິດຊອບຕໍ່ໜີ້ສິນທີ່ຕົນສ້າງຂຶ້ນຕາມກົດໝາຍ.
17. ສະຫຼຸບ ສັງລວມ ການຈັດຕັ້ງປະຕິບັດໜີ້ສິນສາທາລະນະທັງໝົດ ລາຍງານຕໍ່ລັດຖະບານ ໃນແຕ່ລະໄລຍະ.

**ມາດຕາ 57 ຄວາມຮັບຜິດຊອບຂອງກະຊວງແຜນການ ແລະ ການລົງທຶນ**

ກະຊວງແຜນການ ແລະ ການລົງທຶນ ມີຄວາມຮັບຜິດຊອບ ດັ່ງນີ້:

1. ເຂົ້າຮ່ວມກັບກະຊວງການເງິນ ໃນການປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ສ້າງແຜນຄວາມຕ້ອງການແຫຼ່ງທຶນດ້ວຍການກູ້ຢືມ ໃນແຕ່ລະໄລຍະ;

2. ສົມທົບກັບກະຊວງການເງິນ ສັງລວມ ແຜນງານ ແລະ ໂຄງການ ທີ່ນຳໃຊ້ທຶນກູ້ຢືມ ເຂົ້າໃນແຜນການລົງທຶນຂອງລັດ ເພື່ອສະເໜີລັດຖະບານ ພິຈາລະນາຕົກລົງ ໃນແຕ່ລະໄລຍະ;

3. ເປັນເຈົ້າການປະເມີນປະສິດທິຜົນທາງດ້ານເສດຖະກິດ-ການເງິນ, ຮັບຮອງເອົາບົດວິພາກເສດຖະກິດ-ເຕັກນິກຂອງແຜນງານ ຫຼື ໂຄງການ ທີ່ນຳໃຊ້ທຶນກູ້ຢືມ ແລະ ການຄ້ຳປະກັນຂອງລັດຖະບານ;

4. ປະສານສົມທົບກັບ ກະຊວງການເງິນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນງານ ແລະ ໂຄງການ ທີ່ນຳໃຊ້ທຶນກູ້ຢືມ ແລະ ການຄ້ຳປະກັນຂອງລັດຖະບານ;

5. ປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງຂັ້ນແຂວງ ໃນການສັງລວມ, ກວດກາ ແລະ ຢັ້ງຢືນການຂຶ້ນແຜນທຶນສົມທົບ ເພື່ອສະເໜີລັດຖະບານ ພິຈາລະນາ;

6. ສະຫຼຸບ ລາຍງານການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການ ທີ່ນຳໃຊ້ທຶນກູ້ຢືມ ຕໍ່ກະຊວງການເງິນ ແລະ ລັດຖະບານ ໃນແຕ່ລະໄລຍະ.

**ມາດຕາ 58 ຄວາມຮັບຜິດຊອບຂອງທະນາຄານ ແຫ່ງ ສປປ ລາວ**

ທະນາຄານ ແຫ່ງ ສປປ ລາວ ມີຄວາມຮັບຜິດຊອບ ດັ່ງນີ້:

1. ເຂົ້າຮ່ວມກັບ ກະຊວງການເງິນ ແລະ ກະຊວງແຜນການ ແລະ ການລົງທຶນ ສ້າງແຜນການກູ້ຢືມ ແລະ ແຜນຊຳລະໜີ້ສິນສາທາລະນະ ໃນແຕ່ລະໄລຍະ;

2. ເຂົ້າຮ່ວມກັບພາກສ່ວນອື່ນທີ່ກ່ຽວຂ້ອງ ລະດົມທຶນພາຍໃນ ແລະ ຕ່າງປະເທດ ຕາມການຕົກລົງຂອງລັດຖະບານ;

3. ອຳນວຍຄວາມສະດວກໃນການເປີດ, ປິດ, ຄຸ້ມຄອງ ແລະ ຕິດຕາມ ບັນຊີເງິນກູ້ຢືມຂອງລັດຖະບານ;

4. ໃຫ້ບໍລິການໃນການໂອນຊຳລະໜີ້ສິນສາທາລະນະ ທັງພາຍໃນ ແລະ ຕ່າງປະເທດ ຕາມການສະເໜີຂອງກະຊວງການເງິນ;

5. ສະຫຼຸບ ລາຍງານການປະຕິບັດການໂອນຊຳລະໜີ້ສິນສາທາລະນະ ຕໍ່ກະຊວງການເງິນ ແລະ ລັດຖະບານ ໃນແຕ່ລະໄລຍະ.

**ມາດຕາ 59 ຄວາມຮັບຜິດຊອບຂອງກະຊວງ, ອົງການ ແລະ ອົງການປົກຄອງຂັ້ນແຂວງ ທີ່ນຳໃຊ້ທຶນກູ້ຢືມ**

ກະຊວງ, ອົງການ ແລະ ອົງການປົກຄອງຂັ້ນແຂວງ ທີ່ນຳໃຊ້ທຶນກູ້ຢືມ ມີຄວາມຮັບຜິດຊອບ ດັ່ງນີ້:

1. ກະຊວງ, ອົງການ ຄົ້ນຄວ້າ ແລະ ສ້າງບົດວິພາກເສດຖະກິດ-ເຕັກນິກຂອງແຜນງານ ຫຼື ໂຄງການທີ່ຕ້ອງການນຳໃຊ້ທຶນຈາກການກູ້ຢືມ ສະເໜີກະຊວງແຜນການ ແລະ ການລົງທຶນ ແລ້ວສົ່ງໃຫ້ກະຊວງການເງິນສັງລວມນຳສະເໜີລັດຖະບານ ພິຈາລະນາຕົກລົງ;

2. ອົງການປົກຄອງຂັ້ນແຂວງ ຄົ້ນຄວ້າ ສ້າງ ແຜນງານ ຫຼື ໂຄງການ ພ້ອມທັງບົດວິພາກເສດຖະກິດ-ເຕັກນິກ ທີ່ຕ້ອງການນຳໃຊ້ທຶນຈາກການກູ້ຢືມ ສະເໜີສະພາປະຊາຊົນຂັ້ນແຂວງ ພິຈາລະນາຮັບຮອງ ແລ້ວສະເໜີກະຊວງແຜນການ ແລະ ການລົງທຶນ ເພື່ອສົ່ງໃຫ້ກະຊວງການເງິນ ສັງລວມ ນຳສະເໜີລັດຖະບານ ພິຈາລະນາຕົກລົງ;

3. ຈັດຕັ້ງປະຕິບັດ ແຜນງານ ຫຼື ໂຄງການ ທີ່ນຳໃຊ້ທຶນກູ້ຢືມ ໃຫ້ສອດຄ່ອງກັບເປົ້າໝາຍຂອງສັນຍາ ແລະ ລະບຽບການ;

4. ປະຕິບັດການຈັດຊື້-ຈັດຈ້າງ ແລະ ລະບົບການເງິນ-ການບັນຊີ ຕາມກົດໝາຍ;

5. ຕິດຕາມ ກວດກາການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການ ຢ່າງເປັນປົກກະຕິ;

6. ຂຶ້ນແຜນທຶນສົມທົບຂອງລັດຖະບານ ເຂົ້າໃນການຈັດຕັ້ງປະຕິບັດ ແຜນງານ ຫຼື ໂຄງການ ທີ່ນຳໃຊ້ທຶນກູ້ຢືມຈາກຕ່າງປະເທດ ຕາມເງື່ອນໄຂຂອງສັນຍາ;

7. ສົມທົບກັບບັນດາຂະແໜງການ ໃນການກະກຽມໂຄງການທີ່ຈະນຳໃຊ້ທຶນກູ້ຢືມ ເພື່ອສະເໜີສະພາປະຊາຊົນຂັ້ນແຂວງ ພິຈາລະນາຮັບຮອງ;

8. ລາຍງານການຈັດຕັ້ງປະຕິບັດ ແລະ ປະເມີນປະສິດທິຜົນ ໂຄງການທີ່ນຳໃຊ້ທຶນກູ້ຢືມ ໃຫ້ກະຊວງການເງິນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

## ພາກທີ VIII
## ຂໍ້ຫ້າມ

### ມາດຕາ 60 ຂໍ້ຫ້າມທົ່ວໄປ

ຫ້າມການຈັດຕັ້ງ, ນິຕິບຸກຄົນ ແລະ ບຸກຄົນ ມີພຶດຕິກຳ ດັ່ງນີ້:

1. ສ້າງໜີ້ສິນສາທາລະນະ ໃນນາມລັດຖະບານ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

2. ດຳເນີນກິດຈະກຳກ່ຽວກັບໜີ້ສິນສາທາລະນະ ທີ່ນຳຄວາມເສຍຫາຍມາສູ່ເສດຖະກິດແຫ່ງຊາດ ແລະ/ຫຼື ຄວາມໝັ້ນຄົງຂອງຊາດ;

3. ປົກປິດ, ບິດເບືອນ ຫຼື ທຳລາຍຂໍ້ມູນ, ຫຼັກຖານ ກ່ຽວກັບໜີ້ສິນສາທາລະນະ;

4. ເຜີຍແຜ່ຂໍ້ມູນການເງິນກ່ຽວກັບໜີ້ສິນສາທາລະນະ ໂດຍບໍ່ໄດ້ຮັບອະນຸຍາດ;

5. ສະໜອງຂໍ້ມູນ, ເອກະສານ ຊັກຊ້າ, ບໍ່ຄົບຖ້ວນ, ບໍ່ຊັດເຈນ ໃນການກູ້ຢືມ, ການຄ້ຳປະກັນ ແລະ ການໃຫ້ກູ້ຢືມຕໍ່;

6. ສວຍໃຊ້ອຳນາດເພື່ອຈັດສັນ ແລະ ຍາດແຍ່ງຜົນປະໂຫຍດຈາກການກູ້ຢືມ ຊຶ່ງຈະພາໃຫ້ເກີດຄວາມເສຍຫາຍ;

7. ປະລະຄວາມຮັບຜິດຊອບໃນການປະເມີນກ່ອນການກູ້ຢືມ ລວມທັງການຄຸ້ມຄອງຫຼັງການກູ້ຢືມ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 61 ຂໍ້ຫ້າມສຳລັບອົງການລັດຂັ້ນສູນກາງ ແລະ ຂັ້ນແຂວງ ທີ່ນຳໃຊ້ທຶນກູ້ຢືມ

ຫ້າມອົງການລັດຂັ້ນສູນກາງ ແລະ ຂັ້ນແຂວງ ທີ່ນຳໃຊ້ເງິນກູ້ຢືມ ມີພຶດຕິກຳ ດັ່ງນີ້:

1. ສ້າງໂຄງການນອກແຜນ ຫຼື ຈ່າຍເກີນ ແຜນງົບປະມານແຫ່ງລັດ ທີ່ສະພາແຫ່ງຊາດຮັບຮອງ;

2. ກູ້ຢືມໂດຍກົງ, ໃຫ້ກູ້ຢືມຕໍ່ ຫຼື ອອກການຄ້ຳປະກັນ ໂດຍບໍ່ໄດ້ຮັບອະນຸຍາດ;

3. ນຳໃຊ້ທຶນກູ້ຢືມ ເຂົ້າໃນເປົ້າໝາຍທີ່ບໍ່ຖືກຕ້ອງ ຫຼື ນຳໃຊ້ຢ່າງຟູມເຟືອຍ;

4. ຂັດຂວາງ ການກວດກາ, ການແກ້ໄຂ ແລະ ການຈັດຕັ້ງປະຕິບັດກົດໝາຍຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 62 ຂໍ້ຫ້າມສຳລັບພະນັກງານຄຸ້ມຄອງໜີ້ສິນສາທາລະນະ**

ຫ້າມພະນັກງານຄຸ້ມຄອງໜີ້ສິນສາທາລະນະ ມີພຶດຕິກຳ ດັ່ງນີ້:

1. ເຜີຍແຜ່ຂໍ້ມູນການເງິນກ່ຽວກັບໜີ້ສິນສາທາລະນະ ໂດຍບໍ່ໄດ້ຮັບອະນຸຍາດ;
2. ສວຍໃຊ້ໜ້າທີ່ ຕຳແໜ່ງ, ບັງຄັບ ນາບຂູ່, ທວງເອົາ, ຂໍເອົາ ຫຼື ຮັບສິນບົນ;
3. ກົດໜ່ວງ ຖ່ວງດຶງ, ປອມແປງ ເອກະສານ ແລະ ຂາດຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ;
4. ປົກປ້ອງ ຫຼື ສົມຮູ້ຮ່ວມຄິດ ກັບບຸກຄົນ ຫຼື ນິຕິບຸກຄົນ ທີ່ລະເມີດກົດໝາຍ ຊຶ່ງສ້າງຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດ;
5. ນຳໃຊ້ເງິນ ທີ່ກູ້ຢືມ ຫຼື ໃຫ້ກູ້ຢືມຕໍ່ ໂດຍບໍ່ຖືກຕາມກົດໝາຍ ຫຼື ລະບຽບການ;
6. ແນະນຳ ສິ່ງທີ່ຂັດກັບກົດໝາຍ ແລະ ລະບຽບການ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 63 ຂໍ້ຫ້າມສຳລັບຜູ້ໄດ້ຮັບການຄ້ຳປະກັນ**

ຫ້າມ ຜູ້ໄດ້ຮັບການຄ້ຳປະກັນ ມີພຶດຕິກຳ ດັ່ງນີ້:

1. ນຳໃຊ້ທຶນ ໂດຍບໍ່ຖືກຕ້ອງຕາມເປົ້າໝາຍ;
2. ລະເມີດພັນທະຕາມທີ່ໄດ້ກຳນົດໄວ້ໃນສັນຍາການຄ້ຳປະກັນ;
3. ລະເມີດມາດຕະການແກ້ໄຂຂອງກະຊວງການເງິນ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 64 ຂໍ້ຫ້າມສຳລັບຜູ້ກູ້ຢືມຕໍ່**

ຫ້າມຜູ້ກູ້ຢືມຕໍ່ ມີພຶດຕິກຳ ດັ່ງນີ້:

1. ນຳໃຊ້ທຶນກູ້ຢືມຕໍ່ ໂດຍບໍ່ຖືກຕ້ອງຕາມເປົ້າໝາຍທີ່ໄດ້ກຳນົດໄວ້ໃນສັນຍາ;
2. ລະເມີດພັນທະຊຳລະ ຕົ້ນທຶນ, ດອກເບ້ຍ, ຄ່າຄ້ຳປະກັນ ແລະ ຄ່າຄວາມສ່ຽງຕ່າງໆ ຕາມສັນຍາກູ້ຢືມຕໍ່ ລວມທັງກຳນົດເວລາຂອງການກູ້ຢືມຕໍ່;
3. ລະເມີດມາດຕະການເກັບກູ້ໜີ້ສິນ ທີ່ກະຊວງການເງິນໄດ້ກຳນົດ ໃນກໍລະນີຜູ້ກູ້ຢືມຕໍ່ ບໍ່ສາມາດຊຳລະໜີ້ສິນ;
4. ໂອນໜີ້ສິນຂອງຕົນໄປໃຫ້ຜູ້ອື່ນຮັບຜິດຊອບ ໂດຍບໍ່ໄດ້ຮັບອະນຸຍາດ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ IX
## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 65 ຮູບການແກ້ໄຂຂໍ້ຂັດແຍ່ງ**

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບວຽກງານຄຸ້ມຄອງໜີ້ສິນສາທາລະນະ ສາມາດດຳເນີນດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການແກ້ໄຂດ້ວຍການປະນີປະນອມ;

2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຮ້ອງຟ້ອງຕໍ່ສານປະຊາຊົນ;
5. ການແກ້ໄຂທີ່ມີລັກສະນະສາກົນ.

**ມາດຕາ 66 ການແກ້ໄຂດ້ວຍການປະນີປະນອມ**

ໃນກໍລະນີເກີດມີຂໍ້ຂັດແຍ່ງ ກ່ຽວກັບວຽກງານຄຸ້ມຄອງໜີ້ສິນສາທາລະນະ, ຄູ່ກໍລະນີ ສາມາດດໍາເນີນການແກ້ໄຂຂໍ້ຂັດແຍ່ງນໍາກັນໂດຍສັນຕິວິທີ, ປະນີປະນອມກັນ ຫຼື ໂດຍຜ່ານຄົນກາງ ເພື່ອໃຫ້ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ທີ່ສົມເຫດສົມຜົນ ແລະ ເປັນທໍາ.

**ມາດຕາ 67 ການແກ້ໄຂທາງດ້ານບໍລິຫານ**

ໃນກໍລະນີເກີດມີຂໍ້ຂັດແຍ່ງ ກ່ຽວກັບວຽກງານຄຸ້ມຄອງໜີ້ສິນສາທາລະນະ, ຄູ່ກໍລະນີ ສາມາດສະເໜີຕໍ່ອົງການຄຸ້ມຄອງວຽກງານໜີ້ສິນສາທາລະນະ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 71 ຂອງກົດໝາຍສະບັບນີ້ ພິຈາລະນາແກ້ໄຂ. ໃນກໍລະນີທີ່ບໍ່ສາມາດແກ້ໄຂໄດ້ ກໍມີສິດສະເໜີຕໍ່ອົງການຂັ້ນເທິງຖັດໄປເປັນຜູ້ແກ້ໄຂ.

**ມາດຕາ 68 ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນກໍລະນີເກີດມີຂໍ້ຂັດແຍ່ງ ກ່ຽວກັບວຽກງານຄຸ້ມຄອງໜີ້ສິນສາທາລະນະ, ຄູ່ກໍລະນີ ສາມາດສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ບົນພື້ນຖານການເຫັນດີນໍາກັນ ເພື່ອພິຈາລະນາແກ້ໄຂຕາມກົດໝາຍ.

**ມາດຕາ 69 ການຮ້ອງຟ້ອງຕໍ່ສານປະຊາຊົນ**

ໃນກໍລະນີເກີດມີຂໍ້ຂັດແຍ່ງ ກ່ຽວກັບວຽກງານຄຸ້ມຄອງໜີ້ສິນສາທາລະນະ, ຄູ່ກໍລະນີ ຝ່າຍໃດຝ່າຍໜຶ່ງ ສາມາດຮ້ອງຟ້ອງຂຶ້ນສານ ເພື່ອພິຈາລະນາຕັດສິນຕາມກົດໝາຍ.

**ມາດຕາ 70 ການແກ້ໄຂທີ່ມີລັກສະນະສາກົນ**

ໃນກໍລະນີເກີດມີຂໍ້ຂັດແຍ່ງ ກ່ຽວກັບວຽກງານຄຸ້ມຄອງໜີ້ສິນສາທາລະນະ ທີ່ມີລັກສະນະສາກົນ ໃຫ້ປະຕິບັດຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ X
## ການຄຸ້ມຄອງ ແລະ ການກວດກາວຽກງານໜີ້ສິນສາທາລະນະ
### ໝວດທີ 1
### ການຄຸ້ມຄອງວຽກງານໜີ້ສິນສາທາລະນະ

**ມາດຕາ 71 ອົງການຄຸ້ມຄອງວຽກງານໜີ້ສິນສາທາລະນະ**

ລັດຖະບານ ຄຸ້ມຄອງວຽກງານໜີ້ສິນສາທາລະນະ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງການເງິນ ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງຂັ້ນແຂວງ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານຄຸ້ມຄອງໜີ້ສິນສາທາລະນະ ປະກອບດ້ວຍ:

1. ກະຊວງການເງິນ;
2. ພະແນກການເງິນ ແຂວງ, ນະຄອນຫຼວງ.

**ມາດຕາ 72 ສິດ ແລະ ໜ້າທີ່ຂອງກະຊວງການເງິນ**

ໃນການຄຸ້ມຄອງວຽກງານໜີ້ສິນສາທາລະນະ ກະຊວງການເງິນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບການຄຸ້ມຄອງວຽກງານໜີ້ສິນສາທາລະນະ ເພື່ອສະເໜີລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບການຄຸ້ມຄອງວຽກງານໜີ້ສິນສາທາລະນະ;
3. ໂຄສະນາ ເຜີຍແຜ່ ແລະ ສຶກສາອົບຮົມ ແນວທາງ, ນະໂຍບາຍ, ກົດໝາຍ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ກ່ຽວກັບການຄຸ້ມຄອງວຽກງານໜີ້ສິນສາທາລະນະ;
4. ຕາງໜ້າລັດຖະບານ ໃນການເຊັນ ສັນຍາກູ້ຢືມ ຫຼື ໜັງສືຄໍ້າປະກັນ ທັງພາຍໃນ ແລະ ຕ່າງປະເທດ;
5. ອອກ ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການ ກ່ຽວກັບການຄຸ້ມຄອງວຽກງານໜີ້ສິນສາທາລະນະ;
6. ໂຈະ ຫຼື ຍົກເລີກ ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການ ທີ່ຂັດກັບກົດໝາຍວ່າດ້ວຍການຄຸ້ມຄອງໜີ້ສິນສາທາລະນະ;
7. ສ້າງ, ຍົກລະດັບ, ຄຸ້ມຄອງ, ນໍາໃຊ້ ພະນັກງານ-ລັດຖະກອນ ກ່ຽວກັບການຄຸ້ມຄອງວຽກງານໜີ້ສິນສາທາລະນະ;
8. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ, ສາກົນ ເປັນຕົ້ນ ຄູ່ຮ່ວມພັດທະນາ ແລະ ສະຖາບັນການເງິນສາກົນ ກ່ຽວກັບການຄຸ້ມຄອງວຽກງານໜີ້ສິນສາທາລະນະ;
9. ສະຫຼຸບ, ລາຍງານ ການຈັດຕັ້ງປະຕິບັດ ແຜນງານ ແລະ ໂຄງການ ທີ່ນໍາໃຊ້ທຶນກູ້ຢືມໃຫ້ລັດຖະບານ ຢ່າງເປັນປົກກະຕິ;
10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 73 ສິດ ແລະ ໜ້າທີ່ຂອງພະແນກການເງິນ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານໜີ້ສິນສາທາລະນະ ພະແນກການເງິນ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ, ໂຄງການ ກ່ຽວກັບການຄຸ້ມຄອງວຽກງານໜີ້ສິນສາທາລະນະ;
2. ໂຄສະນາ ເຜີຍແຜ່ ແລະ ສຶກສາອົບຮົມ ແນວທາງ, ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ກ່ຽວກັບການຄຸ້ມຄອງວຽກງານໜີ້ສິນສາທາລະນະ;
3. ຕິດຕາມ ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ ແຜນງານ ແລະ ໂຄງການ ທີ່ນໍາໃຊ້ທຶນກູ້ຢືມ;

4. ສະເໜີ ສ້າງ, ຍົກລະດັບ, ຄຸ້ມຄອງ, ນຳໃຊ້ ພະນັກງານ-ລັດຖະກອນ ກ່ຽວກັບການຄຸ້ມຄອງວຽກງານໜີ້ສິນສາທາລະນະ;

5. ນຳໃຊ້ລະບົບຂໍ້ມູນ ຂ່າວສານ ເຕັກໂນໂລຊີ ເຂົ້າໃນການຄຸ້ມຄອງວຽກງານໜີ້ສິນສາທາລະນະ;

6. ປະສານສົມທົບກັບ ກະຊວງການເງິນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງວຽກງານໜີ້ສິນສາທາລະນະ;

7. ພົວພັນ ຮ່ວມມືກັບຕ່າງປະເທດ ກ່ຽວກັບການຄຸ້ມຄອງວຽກງານໜີ້ສິນສາທາລະນະ ຕາມການມອບໝາຍ;

8. ສະຫຼຸບ ລາຍງານການຈັດຕັ້ງປະຕິບັດ ແຜນງານ ແລະ ໂຄງການ ທີ່ນຳໃຊ້ທຶນກູ້ຢືມໃຫ້ກະຊວງການເງິນ ແລະ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ການກວດກາວຽກງານໜີ້ສິນສາທາລະນະ

### ມາດຕາ 74 ອົງການກວດກາວຽກງານໜີ້ສິນສາທາລະນະ

ອົງການກວດກາວຽກງານໜີ້ສິນສາທາລະນະ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານໜີ້ສິນສາທາລະນະ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 71 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ ແລະ ອົງການຈັດຕັ້ງມະຫາຊົນ ຕາມພາລະບົດບາດຂອງຕົນ.

### ມາດຕາ 75 ເນື້ອໃນການກວດກາ

ການກວດກາວຽກງານໜີ້ສິນສາທາລະນະ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກັບວຽກງານໜີ້ສິນສາທາລະນະ;

2. ການນຳໃຊ້ສິດ, ການປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບຂອງພາກສ່ວນອື່ນທີ່ກ່ຽວຂ້ອງກັບວຽກງານໜີ້ສິນສາທາລະນະ;

3. ຄວາມຮັບຜິດຊອບຂອງອົງການຄຸ້ມຄອງວຽກງານໜີ້ສິນສາທາລະນະ.

### ມາດຕາ 76 ຮູບການການກວດກາ

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາທີ່ມີລັກສະນະເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈໍາເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນ ການກວດກາໃນເວລາທີ່ເຫັນວ່າມີຄວາມຈໍາເປັນ ແລະ ຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ໃນການດໍາເນີນການກວດການັ້ນ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍຢ່າງເຂັ້ມງວດ.

## ພາກທີ XI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 77 ນະໂຍບາຍຕໍ່ຜູ້ມີຜົນງານ

ການຈັດຕັ້ງ, ນິຕິບຸກຄົນ ແລະ ບຸກຄົນ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 78 ມາດຕະການຕໍ່ຜູ້ລະເມີດ

ການຈັດຕັ້ງ, ນິຕິບຸກຄົນ ແລະ ບຸກຄົນ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດ ແລະ ເສດຖະກິດຂອງຊາດ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ ຫຼື ຖືກລົງໂທດ ຕາມແຕ່ລະກໍລະນີ ເບົາ ຫຼື ໜັກ ພ້ອມທັງໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ.

### ມາດຕາ 79 ມາດຕະການສຶກສາອົບຮົມ

ບຸກຄົນ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມທີ່ໄດ້ກໍານົດໄວ້ໃນກົດໝາຍສະບັບນີ້ ທີ່ເປັນການກໍ່ຄວາມເສຍຫາຍບໍ່ຫຼວງຫຼາຍ ແລະ ບໍ່ເປັນການກະທໍາຜິດທາງອາຍາ ຈະຖືກກ່າວເຕືອນ ແລະ ສຶກສາອົບຮົມ.

### ມາດຕາ 80 ມາດຕະການທາງວິໄນ

ພະນັກງານ ທີ່ໄດ້ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບການຄຸ້ມຄອງໜີ້ສິນສາທາລະນະ ໂດຍເຈດຕະນາ ແຕ່ບໍ່ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ, ບໍ່ຈິງໃຈລາຍງານຄວາມຜິດຂອງຕົນ ຈະຖືກລົງວິໄນ ເປັນຕົ້ນ ການໂຈະການປະຕິບັດໜ້າທີ່ຊົ່ວຄາວ, ສັບປ່ຽນໜ້າທີ່ ຫຼື ປົດຕໍາແໜ່ງ ແລະ ອື່ນໆ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ.

### ມາດຕາ 81 ມາດຕະການປັບໃໝ

ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຖືກກ່າວເຕືອນ ແລະ ສຶກສາອົບຮົມແລ້ວ ແຕ່ຫາກບໍ່ເຂັດຫຼາບ, ກໍ່ຄວາມເສຍຫາຍ ຊຶ່ງບໍ່ເປັນການກະທໍາຜິດທາງອາຍາ ຈະຖືກປັບໃໝຕາມທີ່ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 82 ມາດຕະການທາງແພ່ງ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ກໍ່ຄວາມເສຍຫາຍແກ່ຜູ້ອື່ນ ເນື່ອງຈາກການນຳໃຊ້ທຶນບໍ່ຖືກຕ້ອງຕາມເປົ້າໝາຍ ຈະຕ້ອງໃຊ້ແທນຄ່າເສຍຫາຍຕາມທີ່ຕົນໄດ້ກໍ່ຂຶ້ນຢ່າງຄົບຖ້ວນ.

**ມາດຕາ 83 ມາດຕະການທາງອາຍາ**

ບຸກຄົນໃດ ທີ່ໄດ້ລະເມີດກົດໝາຍ ກ່ຽວກັບການຄຸ້ມຄອງໜີ້ສິນສາທາລະນະ ແລະ ຂໍ້ຫ້າມ ຊຶ່ງເປັນການກະທຳຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍຕໍ່ ຊັບສິນ ແລະ ຜົນປະໂຫຍດຂອງລັດ, ລວມໝູ່, ບຸກຄົນ, ນິຕິບຸກຄົນອື່ນ ຈະຖືກລົງໂທດຕາມກົດໝາຍ ແລ້ວແຕ່ກໍລະນີເບົາ ຫຼື ໜັກ.

## ພາກທີ XII
## ບົດບັນຍັດສຸດທ້າຍ

**ມາດຕາ 84 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 85 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້